ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 204 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 08.12.2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 (ສະບັບປັບປຸງ ປີ 2015);
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 019/ສພຊ, ລົງວັນທີ 04 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 046/ຄປຈ, ລົງວັນທີ 24 ພະຈິກ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 019 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 04/11/16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງ ປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ) ໃນວາລະກອງປະຊຸມ ຕອນບ່າຍ ຂອງວັນທີ 4 ພະຈິກ 2016.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 4 ພະຈິກ 2016

# ກົດໝາຍ
# ວ່າດ້ວຍ ສື່ມວນຊົນ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການພັດທະນາ, ການຄຸ້ມຄອງ, ການກວດກາສື່ມວນຊົນ ເພື່ອເສີມຂະຫຍາຍບົດບາດ, ຍົກສູງຄຸນນະພາບຂອງສື່ມວນຊົນໃຫ້ກ້າວໜ້າ ແລະ ທັນສະໄໝ, ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ແນໃສ່ຮັບປະກັນການປະຕິບັດເສລີພາບດ້ານສື່ມວນຊົນຂອງພົນລະເມືອງລາວ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ສື່ມວນຊົນ**

ສື່ມວນຊົນ ແມ່ນ ເວທີຖະແຫຼງຂ່າວທີ່ປະກອບດ້ວຍ ສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ຜະລິດຕະພັນສື່ມວນຊົນ, ມີພາລະບົດບາດເປັນກະບອກສຽງຂອງອົງການຈັດຕັ້ງ ພັກ, ລັດ ແລະ ສັງຄົມ ໃນການໂຄສະນາ, ສຶກສາອົບຮົມ ແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ປຸກລະດົມນ້ຳໃຈຮັກຊາດ, ເຜີຍແຜ່ຂໍ້ມູນຂ່າວສານທາງດ້ານ ການເມືອງ, ເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ສາລະຄວາມຮູ້, ສາລະບັນເທີງໃຫ້ແກ່ສັງຄົມ, ປະກອບສ່ວນຕ້ານປາກົດການຫຍໍ້ທໍ້ໃນສັງຄົມ ແລະ ຖ້ອຍທຳນອງທີ່ບິດເບືອນຄວາມຈິງ.

**ມາດຕາ 3 (ປັບປຸງ)ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພາຫະນະສື່ມວນຊົນ** ໝາຍເຖິງ ສື່ສິ່ງພິມ, ສື່ເອເລັກໂຕຣນິກ ລວມທັງຜະລິດຕະພັນສື່ມວນຊົນ;
2. **ຜະລິດຕະພັນສື່ມວນຊົນ** ໝາຍເຖິງ ໜັງສືພິມ, ໃບຂ່າວສານ, ຈົດໝາຍເຫດ, ວາລະສານ, ລາຍການວິທະຍຸ, ລາຍການໂທລະພາບ, ລາຍການໂທລະໂຄ່ງ, ອິນເຕີເນັດ, ເວັບໄຊ, ກະແຊັດ, ຊີດີ, ວີຊີດີ, ດີວີດີ ແລະ ອື່ນໆ;

3. **ອຸປະກອນສື່ເອເລັກໂຕຣນິກ** ໝາຍເຖິງ ອຸປະກອນ ການຜະລິດສື່ເອເລັກໂຕຣນິກ, ເຄື່ອງສົ່ງ ແລະ ເຄື່ອງຮັບສັນຍານສື່ເອເລັກໂຕຣນິກ ທາງພາກພື້ນດິນ, ສາຍ, ດາວທຽມ;

4. **ຄື້ນຄວາມຖີ່** ໝາຍເຖິງ ຄວາມຖີ່ວິທະຍຸເພື່ອການສົ່ງ, ຮັບ ແລະ ການກະຈາຍຂອງສື່ເອເລັກໂຕຣນິກ ທາງສາຍ, ທາງພາກພື້ນດິນ, ທາງດາວທຽມ ຕາມການແບ່ງປັນຂອງອົງການໂທລະຄົມສາກົນ;

5. **ບັນນາທິການ** ໝາຍເຖິງ ຜູ້ກວດແກ້, ກວດຜ່ານເນື້ອໃນ ແລະ ຮູບແບບຂອງ ບົດ, ຂ່າວ ແລະ ລາຍການຂອງສື່ມວນຊົນຕ່າງໆ;

6. **ນັກຂ່າວ** ໝາຍເຖິງ ບຸກຄະລາກອນຂອງອົງການສື່ມວນຊົນທີ່ເຮັດໜ້າທີ່ຊອກເກັບກຳຂໍ້ມູນ ຂ່າວສານຢູ່ພາຍໃນ ແລະ ຕ່າງປະເທດ ແລ້ວແຕ່ງເປັນບົດ, ຂ່າວ ແລະ ລາຍການ ສະໜອງໃຫ້ແກ່ພາຫະນະສື່ມວນຊົນ;

7. **ຫາງສຽງສັງຄົມ** ໝາຍເຖິງ ຄວາມເຫັນຂອງສາທາລະນະຊົນ ຕໍ່ເຫດການ ຫຼື ປາກົດການທີ່ບໍ່ທັນໄດ້ຢັ້ງຢືນ ຫຼື ບໍ່ໄດ້ພິສູດ ຢ່າງເປັນທາງການ;

8. **ອິນເຕີເນັດ** ໝາຍເຖິງ ລະບົບເຄືອຂ່າຍຄອມພິວເຕີ ຊຶ່ງສາມາດສົ່ງຂໍ້ມູນ ຂ່າວສານຫາກັນ ຫຼື ສື່ສານທາງເອເລັກໂຕຣນິກ ດ້ວຍການສົ່ງສັນຍານສຽງ ແລະ ພາບຫາກັນທາງສາຍ ຫຼື ທາງອາກາດ; ຂໍ້ມູນ ຂ່າວສານທີ່ສ້າງຂຶ້ນສາມາດຝາກໄວ້ໃນຖານຂໍ້ມູນ;

9. **ເວັບໄຊ** ໝາຍເຖິງ ໜ້າຂໍ້ມູນ ຂ່າວສານ ກ່ຽວກັບເນື້ອໃນສະເພາະໃດໜຶ່ງທີ່ເປັນຕົວໜັງສື, ຮູບພາບ, ແສງ, ສີ, ສຽງ ທີ່ສ້າງຂຶ້ນດ້ວຍບຸກຄົນ, ອົງການຈັດຕັ້ງຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງສ້າງຂຶ້ນເປັນໜຶ່ງໜ້າ ຫຼື ຫຼາຍໜ້າເວັບ ສົ່ງສັນຍານຜ່ານລະບົບເຄືອຂ່າຍອິນເຕີເນັດ ແລະ ສາມາດເຂົ້າເຖິງໄດ້ທາງຄອມພິວເຕີ, ໂທລະພາບດິຈິຕອນ, ໂທລະສັບມືຖື ແລະ ອຸປະກອນສື່ສານອື່ນ ດ້ວຍລະຫັດຊື່ທາງອິນເຕີເນັດ;

10. **ການຈຳໜ່າຍເປັນໄລຍະ** ໝາຍເຖິງ ການຈຳໜ່າຍເປັນລາຍຕອນ, ລາຍວັນ, ລາຍອາທິດ, ລາຍເດືອນ, ລາຍໄຕມາດ ແລະ ອື່ນໆ;

11. **ສື່ແບບໃໝ່** ໝາຍເຖິງ ພາຫະນະໂຄສະນາປະເພດໜຶ່ງຂອງສື່ເອເລັກໂຕຣນິກທີ່ສາມາດສື່ສານໄດ້ສອງລວງ ດ້ວຍການນຳໃຊ້ເຕັກໂນໂລຊີສື່ສານທັນສະໄໝ ໃນການສົ່ງຂໍ້ມູນ ຂ່າວສານເປັນຕົວອັກສອນ, ພາບ ແລະ ສຽງ ຜ່ານລະບົບເຄືອຂ່າຍອິນເຕີເນັດ ເຊັ່ນ ເຟສບຸກ, ຢູທູບ, ທະວິດເຕີ, ບະລອກ ແລະ ອື່ນໆ;

12. **ສື່ສັງຄົມອອນລາຍ** ໝາຍເຖິງ ສື່ແບບໃໝ່ປະເພດໜຶ່ງ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຊ້ສື່ສານກັນຜ່ານລະບົບເຄືອຂ່າຍອິນເຕີເນັດ ເພື່ອເຜີຍແຜ່ຂໍ້ມູນ ຂ່າວສານສູ່ສາທາລະນະດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານສື່ມວນຊົນ**

ລັດສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນຂອງລັດ ໃຫ້ມີການຂະຫຍາຍຕົວຢ່າງກວ້າງຂວາງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອຸປະກອນເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ສົ່ງເສີມ, ຊຸກຍູ້ ໃຫ້ອົງການສື່ມວນຊົນທຸກພາກສ່ວນເປັນເຈົ້າການ ສ້າງຄວາມເຂັ້ມແຂງດ້ານວິຊາການ, ກຸ້ມຕົນເອງດ້ານການເງິນ ແລະ ອຳນວຍຄວາມສະດວກໃຫ້ແກ່ ການຜະລິດ, ການກະຈາຍ ແລະ ການຈຳໜ່າຍຜະລິດຕະພັນສື່ມວນຊົນ ທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້ ແລະ ເປີດກວ້າງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດມີສ່ວນຮ່ວມ ແລະ ລົງທຶນ ເຂົ້າໃນການພັດທະນາວຽກງານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 5 (ໃໝ່) ຫຼັກການເຄື່ອນໄຫວວຽກງານສື່ມວນຊົນ**

ການເຄື່ອນໄຫວວຽກງານສື່ມວນຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1 ຮັບປະກັນການເປັນກະບອກສຽງຂອງການຈັດຕັ້ງ ພັກ, ລັດ ແລະ ສັງຄົມ ໂດຍສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ;

2 ຮັບປະກັນລັກສະນະຂອງສື່ມວນຊົນ;

3 ຮັບປະກັນໃຫ້ພົນລະເມືອງລາວ ໄດ້ປະຕິບັດສິດເສລີພາບ ແລະ ພັນທະຂອງຕົນດ້ານສື່ມວນຊົນ, ປົກປ້ອງຜູ້ສະໜອງຂໍ້ມູນ ຂ່າວສານ, ປະກອບຄໍາເຫັນ, ສະແດງທັດສະນະຕໍານິຕິຊົມ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ.

**ມາດຕາ 6 (ໃໝ່) ການປົກປ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງບຸກຄະລາກອນສື່ມວນຊົນ, ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ, ຜູ້ຊ່ວຍຊານ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ເຄື່ອນໄຫວກ່ຽວກັບວຽກງານສື່ມວນຊົນ ໄດ້ຮັບການປົກປ້ອງ ຕາມກົດໝາຍຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊື່ສຽງ, ຊັບສິນ ຂອງຕົນ.

**ມາດຕາ 7 (ໃໝ່) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວວຽກງານສື່ມວນຊົນຢູ່ ດິນແດນຂອງ ສປປ ລາວ.

**ມາດຕາ 8 (ປັບປຸງ)ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືດ້ານສື່ມວນຊົນກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການຊຸກຍູ້ການເຄື່ອນໄຫວດ້ານວິຊາການ, ການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ, ສໍາມະນາ, ການຍົກລະດັບຄວາມຮູ້ດ້ານວິຊາການ ເພື່ອເຮັດໃຫ້ວຽກງານສື່ມວນຊົນ ມີຄຸນນະພາບ ແລະ ທັນສະໄໝ ບົນພື້ນຖານການເຄົາລົບ ເອກະລາດ, ອໍານາດອະທິປະໄຕ ຊຶ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ສິດເສລີພາບຂອງພົນລະເມືອງລາວ ດ້ານສື່ມວນຊົນ

**ມາດຕາ 9 (ປັບປຸງ) ສິດເສລີພາບຂອງພົນລະເມືອງລາວດ້ານສື່ມວນຊົນ**

ພົນລະເມືອງລາວ ມີສິດເສລີພາບດ້ານສື່ມວນຊົນ ໂດຍສະແດງອອກດ້ວຍການປະກອບຄໍາເຫັນ, ໃຫ້ທັດສະນະ ແລະ ສາມາດເຂົ້າເຖິງ ຂໍ້ມູນ ຂ່າວສານ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບສະພາບການ, ສາລະ

ຄວາມຮູ້, ສາລະບັນເທີງ ແລະ ບັນຫາອື່ນ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການ ຊຶ່ງເປັນປະໂຫຍດໃຫ້ແກ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ.

**ມາດຕາ 10 (ປັບປຸງ) ສິດເສລີພາບຂອງພົນລະເມືອງລາວ ໃນການປະກອບຄຳເຫັນ**

ພົນລະເມືອງລາວ ມີສິດເສລີພາບໃນການປະກອບຄຳເຫັນຜ່ານສື່ມວນຊົນ ກ່ຽວກັບ:

1. ການສ້າງ ແລະ ຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;
2. ທັດສະນະຕໍ່ສະພາບການພາຍໃນ ແລະ ຕ່າງປະເທດ;
3. ການຕໍານິຕິຊົມແບບສ້າງສັນຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 11 ສິດເສລີພາບຂອງພົນລະເມືອງລາວ ກ່ຽວກັບຂໍ້ມູນ ຂ່າວສານ**

ພົນລະເມືອງລາວ ມີສິດເສລີພາບ ກ່ຽວກັບຂໍ້ມູນ ຂ່າວສານຜ່ານສື່ມວນຊົນ ດັ່ງນີ້:

1. ເຂົ້າເຖິງ ແລະ ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ, ສາລະຄວາມຮູ້, ສາລະບັນເທີງ ແລະ ອື່ນໆ;
2. ສະໜອງຂໍ້ມູນ ຂ່າວສານໃຫ້ສື່ມວນຊົນຢ່າງຖືກຕ້ອງ, ຊັດເຈນ, ທັນການ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນຂໍ້ມູນ ຂ່າວສານນັ້ນ.

**ມາດຕາ 12 (ປັບປຸງ) ການນໍາໃຊ້ສິດເສລີພາບຂອງພົນລະເມືອງລາວ**

ພົນລະເມືອງລາວ ນໍາໃຊ້ສິດເສລີພາບຂອງຕົນຜ່ານສື່ມວນຊົນ ດ້ວຍການລົງພິມ ຫຼື ກະຈາຍຂ່າວ, ບົດ, ຄໍາເຫັນ, ຕອບສໍາພາດ, ກະຈາຍສຽງ, ກະຈາຍພາບ, ຕອບຂໍ້ສະເໜີ, ຂໍ້ຂ້ອງໃຈຂອງຕົນໂດຍສື່ມວນຊົນເອງ ຫຼື ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ. ໃນກໍລະນີທີ່ບໍ່ສາມາດລົງພິມ, ກະຈາຍ ຫຼື ຕອບໄດ້ນັ້ນ ສື່ມວນຊົນຕ້ອງແຈ້ງເຫດຜົນໃຫ້ພົນລະເມືອງຮັບຊາບຢ່າງເປັນທາງການ.

## ພາກທີ III
## ປະເພດ ແລະ ລັກສະນະຂອງສື່ມວນຊົນ
### ໝວດທີ 1
### ປະເພດຂອງສື່ມວນຊົນ

**ມາດຕາ 13 (ປັບປຸງ) ປະເພດຂອງສື່ມວນຊົນ**

ສື່ມວນຊົນ ມີ ສອງ ປະເພດ ຄື:

1. ສື່ສິ່ງພິມ;
2. ສື່ເອເລັກໂຕຣນິກ.

ສື່ມວນຊົນທັງສອງປະເພດນີ້ ສາມາດເຜີຍແຜ່ເປັນພາສາລາວ, ພາສາຊົນເຜົ່າ ຫຼື ພາສາຕ່າງປະເທດ.

**ມາດຕາ 14 ສື່ສິ່ງພິມ**

ສື່ສິ່ງພິມ ແມ່ນ ພາຫະນະໂຄສະນາ ທີ່ເປັນແຜ່ນເຈ້ຍ ຊຶ່ງບັນຈຸຂໍ້ມູນ ຂ່າວສານດ້ວຍ ຕົວໜັງສື ຫຼື ຮູບພາບໂດຍມີຊື່ສະເພາະ.

ສື່ສິ່ງພິມອາດຈຳໜ່າຍເປັນ ລາຍວັນ ຫຼື ເປັນໄລຍະ ຊຶ່ງປະກອບດ້ວຍ ໜັງສືພິມ, ວາລະສານ, ໃບຂ່າວສານ, ຈົດໝາຍເຫດ.

**ມາດຕາ 15 (ປັບປຸງ) ສື່ເອເລັກໂຕຣນິກ**

ສື່ເອເລັກໂຕຣນິກ ແມ່ນ ພາຫະນະໂຄສະນາດ້ວຍການສ້າງເປັນລາຍການ ວິທະຍຸ, ໂທລະພາບ, ໂທລະໂຄ່ງ ແລະ ສື່ແບບໃໝ່ ຫຼື ລາຍການອິນເຕີເນັດປະເພດຕ່າງໆ ຊຶ່ງກະຈາຍອອກຜ່ານເຄື່ອງສົ່ງທາງສາຍ, ທາງອາກາດ ຫຼື ຄື້ນຄວາມຖີ່.

## ໝວດທີ 2
## ລັກສະນະຂອງສື່ມວນຊົນ

**ມາດຕາ 16 ລັກສະນະຂອງສື່ມວນຊົນ**

ສື່ມວນຊົນມີລັກສະນະພື້ນຖານ ດັ່ງນີ້:

1. ລັກສະນະຕົວຈິງ;
2. ລັກສະນະສຶກສາອົບຮົມ;
3. ລັກສະນະແນະນຳ;
4. ລັກສະນະຕໍ່ສູ້.

**ມາດຕາ 17 ລັກສະນະຕົວຈິງ**

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນທຸກປະເພດ ຕ້ອງພາວະວິໄສ, ຖືກຕ້ອງຕາມຄວາມເປັນຈິງ, ຊັດເຈນ, ວ່ອງໄວທັນການ ແລະ ສອດຄ່ອງກັບສິດຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

**ມາດຕາ 18 ລັກສະນະສຶກສາອົບຮົມ**

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນທຸກປະເພດ ຕ້ອງແນໃສ່ສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ຄວາມຮູ້ດ້ານຕ່າງໆ, ສົ່ງເສີມວຽກດີຄົນເດັ່ນ, ປຸກລະດົມນ້ຳໃຈຮັກຊາດ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນ, ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 19 (ປັບປຸງ) ລັກສະນະແນະນຳ**

ເນື້ອໃນ ແລະ ຮູບການຂອງສື່ມວນຊົນທຸກປະເພດ ຕ້ອງແນໃສ່ປຸກລະດົມ ແລະ ແນະນຳມະຫາຊົນຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ພ້ອມທັງອະທິບາຍ, ໃຫ້ຄວາມກະຈ່າງແຈ້ງຢ່າງຖືກຕ້ອງຕໍ່ທາງສຽງສັງຄົມ.

**ມາດຕາ 20 (ປັບປຸງ) ລັກສະນະຕໍ່ສູ້**

ເນື້ອໃນ ແລະ ຮູບການຂອງສື່ມວນຊົນທຸກປະເພດຕ້ອງປົກປ້ອງຄວາມຖືກຕ້ອງຂອງແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ຕຳນິວິຈານ ການລະເມີດກົດໝາຍ ແລະ ລະບຽບການ, ປາກົດການຫຍໍ້ທໍ້ໃນສັງຄົມ ແລະ ຕອບໂຕ້ຢ່າງທັນການຕໍ່ຖ້ອຍທຳນອງທີ່ບິດເບືອນ, ໃສ່ຮ້າຍປ້າຍສີ ທີ່ສ້າງຄວາມເສື່ອມເສຍຕໍ່ກຽດສັກສີ, ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

## ພາກທີ IV
## ການຈັດຕັ້ງ ແລະ ການເຄື່ອນໄຫວສື່ມວນຊົນ
### ໝວດທີ 1
### ການຈັດຕັ້ງ ຂອງສື່ມວນຊົນ

**ມາດຕາ 21 ການຈັດຕັ້ງ**

ການຈັດຕັ້ງຂອງສື່ມວນຊົນ ປະກອບດ້ວຍ:

1. ອົງການເຈົ້າຂອງສື່ມວນຊົນ;
2. ອົງການສື່ມວນຊົນ;
3. ສະມາຄົມນັກຂ່າວ ແຫ່ງ ສປປ ລາວ.

**ມາດຕາ 22 (ປັບປຸງ) ອົງການເຈົ້າຂອງສື່ມວນຊົນ**

ອົງການເຈົ້າຂອງສື່ມວນຊົນ ແມ່ນ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງອົງການສື່ມວນຊົນ ແລະ ດຳເນີນວຽກງານດ້ານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການໂດຍມີຫົວໜ້າ ແລະ ຮອງຫົວໜ້າຂອງອົງການເຈົ້າຂອງສື່ມວນຊົນ ຊຶ່ງແມ່ນຫົວໜ້າອົງການ ຫຼື ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ຊີ້ນຳ ແລະ ຄຸ້ມຄອງອົງການສື່ມວນຊົນດັ່ງກ່າວ.

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການເຈົ້າຂອງສື່ມວນຊົນ**

ອົງການເຈົ້າຂອງສື່ມວນຊົນ ມີສິດຕົ້ນຕໍ ດັ່ງນີ້:

1. ສະເໜີສ້າງຕັ້ງ ແລະ ຍຸບເລີກ ອົງການສື່ມວນຊົນຂອງຕົນ;
2. ຕົກລົງທິດທາງ, ແຜນການ ແລະ ການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ;
3. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າ ຫຼື ຮອງຫົວໜ້າອົງການສື່ມວນຊົນຂອງຕົນ ຕາມລະບຽບການ;

4. ຕິດຕາມ, ກວດກາການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ;

5. ເຂົ້າຮ່ວມກອງປະຊຸມ ກ່ຽວກັບວຽກງານສື່ມວນຊົນຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;

6. ພົວພັນ ແລະ ຮ່ວມມືສາກົນ ດ້ານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ.

ອົງການເຈົ້າຂອງສື່ມວນຊົນມີ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ກຳນົດທິດທາງ, ຈຸດປະສົງ, ເປົ້າໝາຍຮັບໃຊ້, ຂອບເຂດການພິມ ແລະ ຈຳໜ່າຍສິ່ງພິມ ຫຼື ຄວາມແຮງຂອງເຄື່ອງສົ່ງ, ຄື້ນຄວາມຖີ່, ເວລາກະຈາຍ, ຂອບເຂດການກະຈາຍພາບ, ສຽງ ແລະ ພາສາ;

2. ຈັດຕັ້ງກົງຈັກຊ່ວຍວຽກ, ສ້າງບຸກຄະລາກອນ ແລະ ຊີ້ນຳ, ຄຸ້ມຄອງ, ກວດກາການປະຕິບັດອຸດົມການ, ຈຸດປະສົງ, ພາລະບົດບາດ, ສິດ, ໜ້າທີ່, ທິດທາງ, ແຜນການ ແລະ ການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ;

3. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ;

4. ຮັບຜິດຊອບຕໍ່ກົດໝາຍ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນວຽກງານສື່ມວນຊົນ, ຮັບຜິດຊອບແກ້ໄຂ ການຕຳນິຕິຊົມ, ກ່າວຟ້ອງຕໍ່ອົງການສື່ມວນຊົນ ແລະ ບຸກຄະລາກອນສື່ມວນຊົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

### ມາດຕາ 24 ອົງການສື່ມວນຊົນ

ອົງການສື່ມວນຊົນ ແມ່ນ ການຈັດຕັ້ງໜຶ່ງຂອງອົງການເຈົ້າຂອງສື່ມວນຊົນ ທີ່ເຄື່ອນໄຫວວຽກງານດ້ານສື່ມວນຊົນປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້.

### ມາດຕາ 25 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການສື່ມວນຊົນ

ອົງການສື່ມວນຊົນ ມີສິດຕົ້ນຕໍ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນ ຂ່າວສານຢ່າງຖືກຕ້ອງກັບຄວາມເປັນຈິງ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດທີ່ມີປະໂຫຍດຕໍ່ຊາດ ແລະ ປະຊາຊົນ;

2. ຕຳນິຕິຊົມແບບສ້າງສັນຕໍ່ການກະທຳທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ, ປາກົດການຫຍໍ້ທໍ້ໃນສັງຄົມ ເຊັ່ນ ການສໍ້ລາດບັງຫຼວງ, ຢາເສບຕິດ;

3. ຕອບໂຕ້ທຸກຖ້ອຍທຳນອງໂຄສະນາໃສ່ຮ້າຍປ້າຍສີ, ບິດເບືອນຄວາມຈິງ ທີ່ສ້າງຄວາມເສື່ອມເສຍໃຫ້ແກ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ;

4. ພັດທະນາຕົນໃຫ້ມີຄວາມເຂັ້ມແຂງ, ກ້າວໜ້າ ແລະ ທັນສະໄໝ;

5. ພິຈາລະນາເນື້ອໃນ, ຮູບການຂອງຜະລິດຕະພັນສື່ມວນຊົນຂອງຕົນ;

6. ສະເໜີ, ປະກອບຄຳເຫັນຕໍ່ຂັ້ນເທິງ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນຂອງຕົນ;

7. ໄດ້ຮັບການປົກປ້ອງຈາກກົດໝາຍ ໃນການເຄື່ອນໄຫວວຽກງານທີ່ຖືກຕ້ອງຂອງຕົນ;

8. ສ້າງບັນຍາກາດ, ຄວາມເບີກບານມ່ວນຊື່ນ ໃຫ້ແກ່ສັງຄົມ;

9. ເຂົ້າຮ່ວມກອງປະຊຸມກ່ຽວກັບວຽກງານສື່ມວນຊົນຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;

10. ພົວພັນ ແລະ ຮ່ວມມືກັບສາກົນ ຕາມການເຫັນດີຂອງອົງການເຈົ້າຂອງສື່ມວນຊົນ ແລະ ຕາມກົດໝາຍ ແລະ ລະບຽບການ.

ອົງການສື່ມວນຊົນ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ປົກປ້ອງແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ປະກອບສ່ວນຮັກສາສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຮັກຊາດ, ຄວາມສາມັກຄີເປັນປຶກແຜ່ນຂອງວົງຄະນະຍາດແຫ່ງຊາດ;

2. ຜະລິດ ແລະ ເຜີຍແຜ່ ຂໍ້ມູນ ຂ່າວສານທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ໃຫ້ສາລະຄວາມຮູ້, ສາລະບັນເທີງ, ສົ່ງເສີມການສຶກສາ ເພື່ອຍົກລະດັບຄວາມຮູ້ຂອງປະຊາຊົນ, ເສີມຂະຫຍາຍວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງປະຊາຊົນລາວບັນດາເຜົ່າ, ສົ່ງເສີມບົດບາດຍິງ-ຊາຍ, ປົກປ້ອງສິດ ແລະ ຜົນປະ ໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ;

3. ເຜີຍແຜ່ວຽກດີຄົນເດັ່ນ ແລະ ແນະນໍາທາງສຽງສັງຄົມ;

4. ຮັກສາຄວາມຖືກຕ້ອງຂອງພາສາລາວ ແລະ ພາສາຊົນເຜົ່າໃນ ສປປ ລາວ;

5. ສົ່ງເສີມການພົວພັນ, ການຮ່ວມມື, ຄວາມເຂົ້າໃຈຊຶ່ງກັນ ແລະ ກັນລະຫວ່າງປະເທດເພື່ອນມິດ ແລະ ປະຊາຊາດ, ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ຂອງບັນດາປະຊາຊາດ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ;

6. ດໍາເນີນກິດຈະການ ການພິມ ແລະ ຈໍາໜ່າຍສື່ສິ່ງພິມ, ການກະຈາຍພາບ, ສຽງ ແລະ ພາສາ ຕາມທີ່ໄດ້ກໍານົດໄວ້ໃນໃບອະນຸຍາດສ້າງຕັ້ງ;

7. ຄຸ້ມຄອງກົງຈັກຊ່ວຍວຽກ, ສ້າງບຸກຄະລາກອນ ແລະ ປະຕິບັດພາລະບົດບາດ, ສິດ, ໜ້າທີ່, ທິດທາງ, ແຜນການເຄື່ອນໄຫວຂອງຕົນ, ລາຍງານຜົນການເຄື່ອນໄຫວວຽກງານໃຫ້ອົງການເຈົ້າຂອງສື່ມວນຊົນ ແລະ ອົງການຄຸ້ມຄອງສື່ມວນຊົນຢ່າງເປັນປົກກະຕິ;

8. ຮັບປະກັນການປະຕິບັດເສລີພາບ ດ້ານສື່ມວນຊົນຂອງພົນລະເມືອງລາວ;

9. ຮັບຜິດຊອບຕໍ່ກົດໝາຍ ແລະ ຕໍ່ອົງການເຈົ້າຂອງສື່ມວນຊົນ ກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ.

**ມາດຕາ 26 (ປັບປຸງ) ສະມາຄົມນັກຂ່າວ ແຫ່ງ ສປປ ລາວ**

ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແມ່ນ ອົງການຈັດຕັ້ງການເມືອງ, ສັງຄົມ, ວິຊາຊີບ ຂອງຜູ້ເຮັດວຽກງານດ້ານສື່ມວນຊົນ ຊຶ່ງຖືກສ້າງຕັ້ງ ແລະ ເຄື່ອນໄຫວຕາມກົດໝາຍ, ມີພາລະບົດບາດ ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງສະມາຊິກຕົນ ແລະ ຜູ້ເຮັດວຽກງານດ້ານສື່ມວນຊົນອື່ນ, ເຂົ້າຮ່ວມໃນການປະຕິບັດແນວທາງ ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ແລະ ນະໂຍບາຍສື່ມວນຊົນ.

**ມາດຕາ 27 (ໃໝ່) ສິດ ແລະ ໜ້າທີ່ຂອງສະມາຄົມນັກຂ່າວ ແຫ່ງ ສປປ ລາວ**

ສະມາຄົມນັກຂ່າວແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມສ້າງ, ປະຕິບັດ ແລະ ກວດກາການປະຕິບັດແນວທາງ ນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານຖະແຫຼງຂ່າວ ແລະ ສື່ມວນຊົນ;

2. ກຳນົດ ແລະ ກວດກາການປະຕິບັດຈັນຍາບັນຂອງນັກຂ່າວ ແລະ ສົມທົບກັບອົງການຄຸ້ມຄອງສື່ມວນຊົນ, ເຜີຍແຜ່ ແລະ ກວດກາການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບສື່ມວນຊົນ;

3. ສົມທົບກັບອົງການຈັດຕັ້ງຂອງ ພັກ, ລັດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການສື່ມວນຊົນ ເພື່ອບຳລຸງສ້າງດ້ານ ການເມືອງແນວຄິດ, ຄຸນສົມບັດ ແລະ ຄວາມສາມາດທາງດ້ານວິຊາຊີບ ໃຫ້ແກ່ນັກຂ່າວ ແລະ ບຸກຄະລາກອນສື່ມວນຊົນ;

4. ສ້າງລາຍຮັບດ້ວຍການເກັບຄ່າສະມາຊິກ, ການຈັດກິດຈະກຳ ແລະ ການໃຫ້ບໍລິການ ກ່ຽວກັບວຽກງານສື່ມວນຊົນ;

5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ໃນການເຄື່ອນໄຫວວຽກງານສື່ມວນຊົນ;

6. ປະຕິບັດນະໂຍບາຍຍ້ອງຍໍ ດ້ວຍຮູບການຕ່າງໆໃຫ້ແກ່ນັກຂ່າວ, ບຸກຄະລາກອນສື່ມວນຊົນອື່ນ ທີ່ມີຜົນງານດີເດັ່ນຕໍ່ປະເທດຊາດ, ສັງຄົມ ຫຼື ສາກົນ;

7. ພົວພັນຮ່ວມມື ກັບສະມາຄົມນັກຂ່າວຂອງຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ບຸກຄະລາກອນຂອງສື່ມວນຊົນ

**ມາດຕາ 28 (ປັບປຸງ) ບຸກຄະລາກອນ**

ບຸກຄະລາກອນສື່ມວນຊົນ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ອົງການເຈົ້າຂອງສື່ມວນຊົນ, ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ, ນັກຂ່າວ, ນັກວິຊາການດ້ານສື່ມວນຊົນ ແລະ ຜູ້ຮ່ວມງານ.

**ມາດຕາ 29 (ໃໝ່) ເງື່ອນໄຂ ຫົວໜ້າ ແລະ ຮອງຫົວໜ້າອົງການເຈົ້າຂອງສື່ມວນຊົນ**

ຫົວໜ້າ ແລະ ຮອງຫົວໜ້າ ອົງການເຈົ້າຂອງສື່ມວນຊົນ ມີເງື່ອນໄຂ ດັ່ງນີ້:

1. ມີພູມລຳເນົາຖາວອນຢູ່ ສປປ ລາວ;
2. ຖືສັນຊາດລາວ ແລະ ມີອາຍຸ ຊາວສາມປີຂຶ້ນໄປ;

3. ມີປະກາສະນີຍະບັດໃນສາຂາວິຊາສະເພາະໃດໜຶ່ງ ໃນລະດັບການສຶກສາຊັ້ນສູງຂຶ້ນໄປ, ມີປະສົບການດ້ານສື່ມວນຊົນ, ມີຄວາມສາມາດຊີ້ນໍາ, ຄຸ້ມຄອງ ແລະ ກວດກາອົງການສື່ມວນຊົນ;

4. ມີຄຸນສົມບັດສິນທໍາປະຕິວັດ, ຄຸນທາດການເມືອງໜັກແໜ້ນ ແລະ ມີຈັນຍາບັນນັກຂ່າວ;

5. ຮູ້ພາສາຕ່າງປະເທດໃດໜຶ່ງ;

6. ມີສຸຂະພາບດີ;

7. ບໍ່ເປັນຫົວໜ້າ ແລະ ຮອງຫົວໜ້າອົງການສື່ມວນຊົນ ທີ່ຂຶ້ນກັບຕົນ ຫຼື ອົງການສື່ມວນຊົນອື່ນ;

8. ມີເງື່ອນໄຂອື່ນ ທີ່ອົງການເຈົ້າຂອງສື່ມວນຊົນເຫັນວ່າມີຄວາມຈໍາເປັນ.

**ມາດຕາ 30 (ໃໝ່) ສິດ ແລະ ໜ້າທີ່ຂອງຫົວໜ້າ ແລະ ຮອງຫົວໜ້າອົງການເຈົ້າຂອງສື່ມວນຊົນ**

ຫົວໜ້າອົງການເຈົ້າຂອງສື່ມວນຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນໍາ, ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຂອງອົງການສື່ມວນຊົນທີ່ຂຶ້ນກັບຕົນ;

2. ມີຄວາມຮັບຜິດຊອບ ຕໍ່ອົງການເຈົ້າຂອງສື່ມວນຊົນ ແລະ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ກ່ຽວກັບການເຄື່ອນໄຫວຂອງອົງການສື່ມວນຊົນທີ່ຕົນຮັບຜິດຊອບ;

3. ມີສິດ ແລະ ໜ້າທີ່ ໃນການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ ແລະ ຮອງຫົວໜ້າອົງການສື່ມວນຊົນ ໂດຍປະສານສົມທົບກັບອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ຫຼື ເປັນຜູ້ສະເໜີໃຫ້ອົງການທີ່ມີສິດ ພິຈາລະນາຕາມລະບຽບການ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຮອງຫົວໜ້າອົງການເຈົ້າຂອງສື່ມວນຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຫົວໜ້າ ໃນວຽກງານໃດໜຶ່ງ ແລະ ຮັກສາການແທນໃນເວລາຫົວໜ້າບໍ່ຢູ່ ຕາມການມອບໝາຍຂອງຫົວໜ້າ;

2. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 (ປັບປຸງ) ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ**

ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນໄດ້ກໍານົດຊື່ເອີ້ນຕໍາແໜ່ງ ດັ່ງນີ້:

- ສື່ສິ່ງພິມເອີ້ນວ່າ: ຫົວໜ້າບັນນາທິການໃຫຍ່ ແລະ ຮອງຫົວໜ້າບັນນາທິການໃຫຍ່;
- ສື່ເອເລັກໂຕຣນິກ ລວມທັງ ສໍານັກຂ່າວສານປະເທດລາວ ເອີ້ນວ່າ: ຜູ້ອໍານວຍການໃຫຍ່ ແລະ ຮອງຜູ້ອໍານວຍການໃຫຍ່.

ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ ແມ່ນ ເຈົ້າຂອງອົງການສື່ມວນຊົນເປັນຜູ້ຕົກລົງ ໂດຍປະສານສົມທົບກັບອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ຫຼື ເປັນຜູ້ສະເໜີໃຫ້ອົງການທີ່ມີສິດພິຈາລະນາ ຕາມລະບຽບການ.

**ມາດຕາ 32 (ປັບປຸງ) ເງື່ອນໄຂ ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ**

ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ ມີເງື່ອນໄຂ ດັ່ງນີ້:

1. ມີພູມລໍາເນົາຖາວອນຢູ່ ສປປ ລາວ;

2. ຖືສັນຊາດລາວ ແລະ ມີອາຍຸ ຊາວສາມປີ ຂຶ້ນໄປ;

3. ມີປະກາສະນີຍະບັດໃນສາຂາວິຊາສະເພາະໃດໜຶ່ງ ໃນລະດັບການສຶກສາຊັ້ນສູງຂຶ້ນໄປ, ມີປະສົບການດ້ານສື່ມວນຊົນ, ມີຄວາມສາມາດບໍລິຫານອົງການສື່ມວນຊົນ;

4. ມີຄຸນສົມບັດສິນທໍາປະຕິວັດ, ຄຸນທາດການເມືອງໜັກແໜ້ນ ແລະ ມີຈັນຍາບັນນັກຂ່າວ;

5. ຮູ້ພາສາຕ່າງປະເທດໃດໜຶ່ງ;

6. ມີສຸຂະພາບດີ;

7. ບໍ່ເປັນຫົວໜ້າ ຫຼື ຮອງຫົວໜ້າອົງການສື່ມວນຊົນອື່ນ;

8. ມີເງື່ອນໄຂອື່ນ ທີ່ອົງການເຈົ້າຂອງສື່ມວນຊົນເຫັນວ່າມີຄວາມຈໍາເປັນ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າອົງການສື່ມວນຊົນ**

ຫົວໜ້າອົງການສື່ມວນຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນໍາ ແລະ ຄຸ້ມຄອງການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ;

2. ພິຈາລະນາອະນຸຍາດ ແລະ ກວດກາ ການລົງຂ່າວ, ບົດ ໃນສື່ສິ່ງພິມ, ລາຍການກະຈາຍສຽງ, ໂທລະພາບ, ເວັບໄຊ ແລະ ສື່ແບບໃໝ່;

3. ຄຸ້ມຄອງ, ບໍາລຸງສ້າງບຸກຄະລາກອນ, ຄຸ້ມຄອງຊັບສິນ ແລະ ພື້ນຖານວັດຖຸເຕັກນິກ;

4. ມີຄວາມຮັບຜິດຊອບຕໍ່ອົງການເຈົ້າຂອງສື່ມວນຊົນ ກ່ຽວກັບເນື້ອໃນ ແລະ ການເຄື່ອນໄຫວ ຂອງອົງການສື່ມວນຊົນທີ່ຕົນຮັບຜິດຊອບ;

5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

ຮອງຫົວໜ້າອົງການສື່ມວນຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຫົວໜ້າໃນວຽກງານໃດໜຶ່ງ ແລະ ຮັກສາການແທນໃນເວລາຫົວໜ້າບໍ່ຢູ່ ຕາມການມອບໝາຍຂອງຫົວໜ້າ;

2. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 (ປັບປຸງ) ເງື່ອນໄຂນັກຂ່າວ**

ນັກຂ່າວມີເງື່ອນໄຂ ດັ່ງນີ້:

1. ມີພູມລໍາເນົາຖາວອນຢູ່ ສປປ ລາວ;

2. ຖືສັນຊາດລາວ ແລະ ມີອາຍຸແຕ່ ສິບແປດປີ ຂຶ້ນໄປ;

3. ມີຈັນຍາບັນຂອງນັກຂ່າວຢ່າງຄົບຖ້ວນ;

4. ມີປະກາສະນີຍະບັດໃນສາຂາວິຊາສະເພາະໃດໜຶ່ງ ໃນລະດັບການສຶກສາຊັ້ນກາງຂຶ້ນໄປ ຫຼື ມີໃບຢັ້ງຢືນ, ມີຄວາມຮູ້, ມີປະສົບການ ແລະ ມີພອນສະຫວັນດ້ານສື່ມວນຊົນ;

5. ຮູ້ພາສາຕ່າງປະເທດໃດໜຶ່ງ;

6. ມີສຸຂະພາບດີ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ ຂອງນັກຂ່າວ.**

ນັກຂ່າວ ມີ ສິດຕົ້ນຕໍ ດັ່ງນີ້:

1. ໄດ້ຮັບບັດນັກຂ່າວ, ສັງກັດ ແລະ ເຄື່ອນໄຫວຢູ່ໃນອົງການສື່ມວນຊົນໃດໜຶ່ງ;
2. ປະຕິບັດວຽກງານດ້ານການຂ່າວຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
3. ພົວພັນ, ຮ່ວມມືກັບຜູ້ຮ່ວມງານຢ່າງເປັນປົກກະຕິ, ຊອກຮູ້, ເກັບກຳ ແລະ ຮັບຂໍ້ມູນ ຂ່າວສານ ໃນວຽກງານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ;
4. ໃຊ້ບັດນັກຂ່າວ ເພື່ອສະເໜີຊອກຮູ້, ຮັບການສະໜອງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ຈາກການຈັດຕັ້ງ ແລະ ບຸກຄົນ ເພື່ອວຽກງານສື່ມວນຊົນ;
5. ວິເຄາະ, ວິໄຈ, ຂຽນຂ່າວ, ບົດ, ຖ່າຍທຳຮູບພາບຕ່າງໆ, ສ້າງຜະລິດຕະພັນສື່ມວນຊົນທີ່ສ້າງສັນ ແລະ ມີຄຸນປະໂຫຍດ, ໃສ່ນາມປາກກາເປັນຊື່ຕົນເອງ ຫຼື ຊື່ແຝງ;
6. ໄດ້ຮັບການບຳລຸງ, ຍົກລະດັບດ້ານການເມືອງ, ວິຊາສະເພາະດ້ານສື່ມວນຊົນ, ຮັບນາມມະຍົດ ເງິນອຸດໜູນ ຫຼື ນະໂຍບາຍອື່ນ;
7. ໄດ້ຮັບບູລິມະສິດໃນການເຄື່ອນໄຫວວຽກງານດ້ານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ;
8. ໄດ້ຮັບການປົກປ້ອງຈາກກົດໝາຍ ໃນການເຄື່ອນໄຫວປະຕິບັດໜ້າທີ່ວິຊາສະເພາະຂອງຕົນທີ່ຖືກຕ້ອງ.

ນັກຂ່າວ ມີ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຊອກຮູ້, ເກັບກຳຂໍ້ມູນ ຂ່າວສານ ເພື່ອຂຽນເປັນຂ່າວ, ບົດ ແລະ ລາຍການ, ໂຄສະນາເຜີຍແຜ່ ຜ່ານສື່ມວນຊົນ;
2. ຂຽນ ຂ່າວ, ບົດ ຢ່າງຖືກຕ້ອງ, ຊັດເຈນ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບສິດຜົນປະໂຫຍດຂອງຊາດ ແລະ ສ່ອງແສງເຖິງຄວາມມຸ່ງມາດປາຖະໜາອັນຊອບທຳຂອງປະຊາຊົນ;
3. ເຜີຍແຜ່, ປົກປ້ອງແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ; ຂຸດຄົ້ນ, ສົ່ງເສີມບັດໄຈທີ່ຕັ້ງໜ້າ, ຕໍ່ສູ້ຕ້ານບັນດາແນວຄິດ ແລະ ການກະທຳທີ່ລະເມີດກົດໝາຍ ແລະ ລະບຽບການ; ຕອບໂຕ້ຖ້ອຍທຳນອງບິດເບືອນ ແລະ ໃສ່ຮ້າຍປ້າຍສີທີ່ສ້າງຄວາມເສື່ອມເສຍໃຫ້ແກ່ກຽດສັກສີ, ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ;
4. ຄົ້ນຄວ້າ, ຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງ ເພື່ອຍົກລະດັບທາງດ້ານການເມືອງ, ຄຸນສົມບັດ, ຈັນຍາບັນ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ອື່ນໆ;
5. ແກ້ຂ່າວ ແລະ ຂໍໂທດຜ່ານສື່ມວນຊົນໃນກໍລະນີທີ່ຂຽນຂ່າວຜິດພາດ ຫຼື ບໍ່ມີມູນຄວາມຈິງ;
6. ຮັບການຕຳນິຕິຊົມຈາກສັງຄົມ, ຮັບຜິດຊອບຕໍ່ກົດໝາຍ ແລະ ຕໍ່ອົງການສື່ມວນຊົນ ກ່ຽວກັບເນື້ອໃນຂ່າວ, ບົດ ແລະ ການກະທຳທີ່ບໍ່ຖືກຕ້ອງຂອງຕົນ.
7. ປະຕິບັດຈັນຍາບັນນັກຂ່າວ, ບໍ່ສວຍໃຊ້ໜ້າທີ່ນັກຂ່າວ ເພື່ອສວຍໂອກາດ ແລະ ລະເມີດກົດໝາຍ.

### ມາດຕາ 36 ນັກວິຊາການດ້ານສື່ມວນຊົນ

ນັກວິຊາການດ້ານສື່ມວນຊົນ ແມ່ນ ບຸກຄະລາກອນທີ່ປະຕິບັດງານໃນອົງການສື່ມວນຊົນ ຊຶ່ງມີນັກປະພັນ, ນັກກະວີ, ໂຄສົກ, ພິທີກອນ, ຜູ້ຈັດລາຍການ, ຜູ້ກຳກັບການສະແດງ, ຜູ້ອອກແບບການພິມ, ນັກແຕ້ມ, ນັກປະດັບປະດາ, ນາຍຊ່າງເຕັກນິກ ແລະ ນັກວິຊາການອື່ນທີ່ຮັບໃຊ້ການສ້າງຜະລິດຕະພັນສື່ມວນຊົນປະເພດຕ່າງໆ.

ສິດ ແລະ ໜ້າທີ່ ຂອງນັກວິຊາການດ້ານສື່ມວນຊົນ ຂອງແຕ່ລະອົງການສື່ມວນຊົນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 37 (ປັບປຸງ) ຜູ້ຮ່ວມງານ

ຜູ້ຮ່ວມງານ ແມ່ນ ຜູ້ທີ່ບໍ່ມີອາຊີບເປັນນັກຂ່າວ ແຕ່ເປັນຜູ້ຂຽນຂ່າວ, ບົດ, ຖ່າຍພາບ, ຜະລິດລາຍການສະໜອງໃຫ້ອົງການສື່ມວນຊົນ ໂດຍໄດ້ຮັບຄ່າແຮງງານ ແລະ ນະໂຍບາຍອື່ນ ຈາກອົງການສື່ມວນຊົນ ຕາມລະບຽບການ.

ສິດ ແລະ ໜ້າທີ່ຂອງຜູ້ຮ່ວມງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 38 (ໃໝ່) ບັດນັກຂ່າວ

ບັດນັກຂ່າວ ແມ່ນ ເອກະສານທີ່ຢັ້ງຢືນການເປັນນັກຂ່າວ ຊຶ່ງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກໃຫ້ ແລະ ມີອາຍຸ ຫ້າປີ.

ບັດນັກຂ່າວ ສາມາດປະຕິບັດໃນກໍລະນີ ດັ່ງນີ້:

1. ເປົ້າໝາຍຮັບບັດນັກຂ່າວ

ເປົ້າໝາຍຮັບບັດນັກຂ່າວ ແມ່ນ ບຸກຄະລາກອນສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້, ພະນັກງານສະມາຄົມນັກຂ່າວ ແລະ ພະນັກງານຄຸ້ມຄອງວຽກງານສື່ມວນຊົນ.

2. ການມອບບັດນັກຂ່າວ ມີກໍລະນີ ດັ່ງນີ້:

- ບຸກຄະລາກອນສື່ມວນຊົນ, ພະນັກງານສະມາຄົມນັກຂ່າວ ແລະ ພະນັກງານຄຸ້ມຄອງວຽກງານສື່ມວນຊົນ ທີ່ມີເງື່ອນໄຂ, ມາດຕະຖານຄົບຖ້ວນ, ມີການເຄື່ອນໄຫວວຽກງານສື່ມວນຊົນຢ່າງໜ້ອຍ ສາມປີ ແລະ ໄດ້ຮັບການສະເໜີຈາກອົງການສື່ມວນຊົນທີ່ຕົນສັງກັດ.
- ຜູ້ໄດ້ຮັບບັດນັກຂ່າວຖືກຍົກຍ້າຍໄປປະຈຳການຢູ່ອົງການອື່ນ ທີ່ຍັງເປັນເປົ້າໝາຍຖືບັດນັກຂ່າວນັ້ນ ຈະຕ້ອງສະເໜີຂໍປ່ຽນບັດນັກຂ່າວໃໝ່ໃຫ້ສອດຄ່ອງກັບການຈັດຕັ້ງໃໝ່;
- ກໍລະນີບັດເສຍ, ຂາດ, ໃຊ້ການບໍ່ໄດ້, ເຈົ້າຂອງບັດນັກຂ່າວ ຕ້ອງເຮັດໃບສະເໜີ ພ້ອມຕິດຄັດບັດເກົ່າ ແລະ ໃບຢັ້ງຢືນທີ່ຢູ່ ເພື່ອຂໍບັດນັກຂ່າວໃໝ່ ໂດຍຜ່ານການຢັ້ງຢືນຂອງຫົວໜ້າອົງການສື່ມວນຊົນ ຫຼື ການຈັດຕັ້ງທີ່ຕົນສັງກັດ;
- ຜູ້ທີ່ຖືກຖອນບັດທາງວິໄນ ແຕ່ໄດ້ປັບປຸງ, ປ່ຽນແປງ ຕົນເອງ ເຄົາລົບຈັນຍາບັນ, ກົດໝາຍ ແລະ ລະບຽບການ ແລະ ໄດ້ຮັບການສະເໜີຈາກອົງການສື່ມວນຊົນທີ່ກ່ຽວຂ້ອງ.

3. ການຖອນບັດນັກຂ່າວ ມີກໍລະນີ ດັ່ງນີ້:

- ຖືກຍົກຍ້າຍໄປປະຈໍາການຢູ່ອົງການອື່ນທີ່ບໍ່ ແມ່ນ ເປົ້າໝາຍຖືບັດນັກຂ່າວ ຫຼື ບໍ່ໄດ້ເຄື່ອນໄຫວວຽກງານສື່ມວນຊົນ;
- ເຮັດວຽກໃນອົງການສື່ມວນຊົນທີ່ຖືກຖອນໃບອະນຸຍາດເຄື່ອນໄຫວສື່ມວນຊົນ;
- ລະເມີດຈັນຍາບັນນັກຂ່າວ ຫຼື ສວຍໃຊ້ບັດໃນທາງຜິດກົດໝາຍ;
- ຖືກລົງວິໄນຂັ້ນໂຈະວຽກ, ຖືກກ່າວຟ້ອງ ຫຼື ຖືກສານຕັດສິນລົງໂທດ;
- ຢຸດວຽກ.

ພາຍໃນເວລາ ສິບຫ້າວັນ ທີ່ມີຄໍາສັ່ງຖອນບັດ, ຫົວໜ້າອົງການສື່ມວນຊົນ ຕ້ອງແຈ້ງໃຫ້ຜູ້ຖືບັດນັກຂ່າວຊາບເປັນລາຍລັກອັກສອນ ເພື່ອສົ່ງບັດໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

## ໝວດທີ 3
## ການສ້າງຕັ້ງອົງການສື່ມວນຊົນ

### ມາດຕາ 39 (ປັບປຸງ) ເງື່ອນໄຂການສ້າງຕັ້ງອົງການສື່ມວນຊົນ

ການສ້າງຕັ້ງອົງການສື່ມວນຊົນ ມີເງື່ອນໄຂ ດັ່ງນີ້:

1. ກໍານົດ ຊື່, ປະເພດສື່ມວນຊົນ, ອຸດົມການ, ຈຸດປະສົງທີ່ສອດຄ່ອງກັບ ພາລະບົດບາດຂອງອົງການເຈົ້າຂອງສື່ມວນຊົນ, ເປົ້າໝາຍຮັບໃຊ້, ຂອບເຂດການພິມ ແລະ ຈໍາໜ່າຍສິ່ງພິມ, ກໍາລັງແຮງຂອງເຄື່ອງສົ່ງ, ກໍານົດເວລາການກະຈາຍ, ກໍານົດການນໍາໃຊ້ຄື້ນຄວາມຖີ່, ຂອບເຂດການກະຈາຍຄື້ນ, ລວມທັງພາສາ, ລະຫັດຊື່ທາງອິນເຕີເນັດທີ່ຈະນໍາໃຊ້ຂອງອົງການສື່ມວນຊົນນັ້ນ;
2. ກໍານົດຊື່, ໂຄງປະກອບ, ເນື້ອໃນ, ຮູບແບບຂອງຜະລິດຕະພັນສື່ມວນຊົນ;
3. ມີກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ທີ່ມີເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29, 32 ແລະ 34 ຂອງກົດໝາຍສະບັບນີ້;
4. ມີສໍານັກງານ, ພາຫະນະ, ອຸປະກອນເຕັກນິກ, ທຶນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ;
5. ສອດຄ່ອງກັບແຜນພັດທະນາ ແລະ ຄຸ້ມຄອງສື່ມວນຊົນໃນແຕ່ລະໄລຍະ.

### ມາດຕາ 40 (ໃໝ່) ການພິຈາລະນາອະນຸຍາດການສະເໜີສ້າງຕັ້ງອົງການສື່ມວນຊົນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງອົງການສື່ມວນຊົນ ຕ້ອງຍື່ນຄໍາຮ້ອງ ແລະ ບົດວິພາກ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເພື່ອພິຈາລະນາອະນຸຍາດໃຫ້ເຄື່ອນໄຫວວຽກງານສື່ມວນຊົນ. ພາຍໃນກໍານົດເວລາ ເກົ້າສິບວັນ ຫຼັງຈາກໄດ້ຮັບຄໍາຮ້ອງ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຕ້ອງພິຈາລະນາອອກໃບອະນຸຍາດ, ໃນກໍລະນີບໍ່ອະນຸຍາດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ.

ພາຍຫຼັງໄດ້ຮັບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ, ອົງການເຈົ້າຂອງສື່ມວນຊົນ ຕ້ອງສ້າງຕັ້ງອົງການສື່ມວນຊົນຂອງຕົນ ແລ້ວລາຍງານຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງແຈ້ງຜ່ານສື່ມວນຊົນ.

**ມາດຕາ 41 (ໃໝ່) ການປ່ຽນແປງຂໍ້ມູນໃນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ**

ອົງການສື່ມວນຊົນ ທີ່ມີຈຸດປະສົງເພີ່ມເຕີມ ຫຼື ປ່ຽນແປງຂໍ້ມູນໃນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນຂອງຕົນ ໃຫ້ສະເໜີຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອພິຈາລະນາ.

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຈ້ງຕອບເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

**ມາດຕາ 42 (ໃໝ່) ການໂຈະ, ການຖອນ ຫຼື ການຢຸດເຊົາການເຄື່ອນໄຫວວຽກງານສື່ມວນຊົນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສາມາດໂຈະການເຄື່ອນໄຫວ ຫຼື ຖອນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ ຖ້າວ່າອົງການສື່ມວນຊົນທີ່ກ່ຽວຂ້ອງ ບໍ່ເຄື່ອນໄຫວວຽກງານສື່ມວນຊົນ ຫຼື ເຄື່ອນໄຫວຕາມຈຸດປະສົງ, ເນື້ອໃນ ແລະ ຮູບແບບທີ່ໄດ້ອະນຸຍາດ ຫຼື ບໍ່ມີຜະລິດຕະພັນສື່ມວນຊົນອອກສູ່ສັງຄົມ ພາຍໃນກຳນົດເວລາສາມເດືອນ ສຳລັບສື່ສິ່ງພິມ ແລະ ເວັບໄຊ; ເກົ້າເດືອນ ສຳລັບວິທະຍຸກະຈາຍສຽງ, ໂທລະພາບ ນັບແຕ່ວັນ ໄດ້ຮັບອະນຸຍາດ ເປັນຕົ້ນໄປ.

ໃນກໍລະນີ ທີ່ອົງການເຈົ້າຂອງສື່ມວນຊົນ ມີຈຸດປະສົງຢຸດເຊົາ ການເຄື່ອນໄຫວວຽກງານສື່ມວນຊົນຂອງຕົນ ຕ້ອງແຈ້ງເປັນລາຍລັກອັກສອນຢ່າງຊ້າ ສາມສິບວັນ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຖອນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ ແລະ ອອກແຈ້ງການຜ່ານສື່ມວນຊົນ.

ຖ້າຫາກມີຈຸດປະສົງຂໍອະນຸຍາດຄືນໃໝ່ ອົງການເຈົ້າຂອງສື່ມວນຊົນທີ່ຖືກຖອນໃບອະນຸຍາດນັ້ນ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອພິຈາລະນາ.

**ມາດຕາ 43 ການສ້າງຕັ້ງສຳນັກງານຜູ້ຕາງໜ້າອົງການສື່ມວນຊົນ**

ລັດຖະບານ ເປັນຜູ້ອະນຸຍາດການສ້າງຕັ້ງສຳນັກງານຜູ້ຕາງໜ້າອົງການສື່ມວນຊົນລາວ ປະຈຳຢູ່ຕ່າງປະເທດ ແລະ ໃຫ້ອົງການສື່ມວນຊົນຕ່າງປະເທດເຂົ້າມາປະຈຳ ຫຼື ສ້າງຕັ້ງສຳນັກງານຜູ້ຕາງໜ້າ ຂອງອົງການສື່ມວນຊົນຕ່າງປະເທດຢູ່ ສປປ ລາວ. ນັກຂ່າວ, ນັກວິຊາການດ້ານສື່ມວນຊົນ ແລະ ຄະນະຮັບຜິດຊອບອົງການສື່ມວນຊົນຕ່າງປະເທດ ທີ່ມາເຄື່ອນໄຫວຢູ່ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ສຳລັບການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງຜູ້ຕາງໜ້າອົງການສື່ມວນຊົນຂອງພາຍໃນ ແລະ ຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ກິດຈະການສື່ມວນຊົນ

**ມາດຕາ 44 ກິດຈະການສື່ມວນຊົນ**

ກິດຈະການສື່ມວນຊົນ ມີ ດັ່ງນີ້:

1. ການຊອກຮູ້, ເກັບກຳຂໍ້ມູນ ຂ່າວສານ;
2. ການໄດ້ຮັບການສະໜອງຂໍ້ມູນ ຂ່າວສານຈາກສັງຄົມ;
3. ການເຜີຍແຜ່ບົດ, ຂ່າວ ແລະ ແຈ້ງການຕ່າງໆ;
4. ການໃຫ້ຄຳຕອບ;
5. ການແກ້ຂ່າວ;
6. ການບໍລິການ;
7. ການບັນເທີງ.

**ມາດຕາ 45 ການຊອກຮູ້, ເກັບກຳຂໍ້ມູນ ຂ່າວສານ**

ສື່ມວນຊົນ ຕ້ອງເຄື່ອນໄຫວຊອກຮູ້, ເກັບກຳຂໍ້ມູນ ຂ່າວສານຢ່າງກວ້າງຂວາງ, ຄົບຖ້ວນ, ຊັດເຈນ, ວ່ອງໄວ ແລະ ທັນການ ເພື່ອຄົ້ນຄວ້າ, ແຕ່ງເປັນບົດ, ຂ່າວ, ລາຍການ ແລະ ແຈ້ງການຕ່າງໆ.

**ມາດຕາ 46 (ປັບປຸງ) ການໄດ້ຮັບການສະໜອງຂໍ້ມູນ ຂ່າວສານຈາກສັງຄົມ**

ສື່ມວນຊົນ ມີສິດໄດ້ຮັບຂໍ້ມູນ ຂ່າວສານຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອພິຈາລະນາອອກຂ່າວຕາມຄວາມເໝາະສົມ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງປະກອບສ່ວນໃນການສະໜອງ ແລະ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນຂໍ້ມູນ ຂ່າວສານທີ່ຕົນໄດ້ສະໜອງໃຫ້ສື່ມວນຊົນ ຜ່ານສື່ສັງຄົມອອນລາຍ, ກອງປະຊຸມຖະແຫຼງຂ່າວ, ການສຳພາດ ແລະ ຮູບແບບອື່ນ. ອົງການສື່ມວນຊົນ ຕ້ອງໄດ້ນຳໃຊ້ເນື້ອໃນຂໍ້ມູນທີ່ສະໜອງໃຫ້ນັ້ນ ຢ່າງຖືກຕ້ອງ ແລະ ຕ້ອງແຈ້ງແຫຼ່ງ ຫຼື ທີ່ມາຂອງຂໍ້ມູນນັ້ນ.

ໃນກໍລະນີທີ່ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບປາກົດການຫຍໍ້ທໍ້ໃນສັງຄົມ, ການລະເມີດກົດໝາຍ ແລະ ລະບຽບການສື່ມວນຊົນ ກໍສາມາດແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງຊາບ ເພື່ອພິຈາລະນາ.

ສຳລັບຂ່າວກ່ຽວກັບຄະດີ ທີ່ພວມສືບສວນ-ສອບສວນ ຫຼື ຄະດີທີ່ຍັງບໍ່ທັນຕັດສີນນັ້ນ ອົງການທີ່ດຳເນີນຄະດີ ມີສິດສະຫງວນຄວາມລັບກ່ຽວກັບ ຂໍ້ມູນ ຂ່າວສານ ຕໍ່ສື່ມວນຊົນ, ແຕ່ສື່ມວນຊົນ ກໍມີສິດອອກຂ່າວຕາມແຫຼ່ງຂ່າວທີ່ໜ້າເຊື່ອຖືໄດ້ ແລະ ເປັນປະໂຫຍດໃຫ້ແກ່ສັງຄົມ ດ້ວຍຄວາມຮັບຜິດຊອບຂອງຕົນ ຕໍ່ໜ້າກົດໝາຍ ເວັ້ນເສຍແຕ່ມີຄຳສັ່ງໂຈະ ຫຼື ຫ້າມການອອກຂ່າວຈາກອົງການທີ່ກ່ຽວຂ້ອງ.

ສື່ມວນຊົນ ຈະບໍ່ເປີດເຜີຍ ຊື່ ແລະ ຮູບພາບຂອງຜູ້ສະໜອງ ຂໍ້ມູນ ຂ່າວສານ ຖ້າເຫັນວ່າ ມີຜົນເສຍຫາຍຕໍ່ຜູ້ສະໜອງ ຂໍ້ມູນ ຂ່າວສານ, ສະມາຊິກຄອບຄົວ ແລະ ການຈັດຕັ້ງນັ້ນ ເວັ້ນເສຍແຕ່ຈະສະໜອງໃຫ້ຕາມການສະເໜີ ຂອງອົງການສືບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ.

**ມາດຕາ 47 ການເຜີຍແຜ່ ບົດ, ຂ່າວ, ລາຍການ ແລະ ແຈ້ງການ**

ເມື່ອສື່ມວນຊົນໄດ້ເກັບກໍາຂໍ້ມູນ ຂ່າວສານ ຫຼື ຮັບຂໍ້ມູນ ຂ່າວສານ ຈາກສັງຄົມແລ້ວ ຕ້ອງຄົ້ນຄວ້າພິຈາລະນາຢ່າງຖີ່ຖ້ວນ ຖ້າເຫັນວ່າເປັນຜົນປະໂຫຍດໃຫ້ແກ່ປະເທດຊາດ ແລະ ສັງຄົມ ຈຶ່ງແຕ່ງເປັນບົດ, ຂ່າວ, ແຈ້ງການ ແລະ ລາຍການຕ່າງໆ ເພື່ອເຜີຍແຜ່ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ແລະ ທັນເວລາຜ່ານພາຫະນະຂອງຕົນ.

**ມາດຕາ 48 (ປັບປຸງ) ການໃຫ້ຄໍາຕອບ**

ສື່ມວນຊົນມີສິດສະເໜີໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງຕອບບັນຫາທີ່ພົນລະເມືອງລາວ ຫຼື ອົງການຈັດຕັ້ງຕ່າງໆຂໍຄວາມກະຈ່າງແຈ້ງ, ເມື່ອບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບຄໍາສະເໜີດັ່ງກ່າວ ຕ້ອງຕອບພາຍໃນ ສິບຫ້າວັນ ພາຍຫຼັງໄດ້ຮັບຄໍາສະເໜີ ແລະ ມີຄວາມຮັບຜິດຊອບຕໍ່ຄໍາຕອບຂອງຕົນ. ຖ້າຫາກບໍ່ໄດ້ຮັບຄໍາຕອບຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ອົງການສື່ມວນຊົນ ມີສິດສົ່ງຄໍາເຫັນ, ຄວາມຂັດຂ້ອງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ ເຖິງການຈັດຕັ້ງຂັ້ນເທິງ ທີ່ມີສິດອໍານາດແກ້ໄຂ ຫຼື ນໍາບັນຫານັ້ນ ລົງເຜີຍແຜ່ໃນສື່ມວນຊົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ ມີສິດສະເໜີໃຫ້ສື່ມວນຊົນຊີ້ແຈງ ກ່ຽວກັບຂ່າວທີ່ໄດ້ເຜີຍແຜ່ອອກໄປ ທີ່ຍັງບໍ່ຈະແຈ້ງນັ້ນ ແລະ ຕ້ອງໃຫ້ຄໍາຕອບຢ່າງວ່ອງໄວ.

ອົງການຈັດຕັ້ງ ພັກ, ລັດ, ແນວລາວສ້າງຊາດ, ມະຫາຊົນ ແລະ ສັງຄົມ ສາມາດແຕ່ງຕັ້ງພະນັກງານປະຊາສໍາພັນ ເພື່ອປະຕິບັດໜ້າທີ່ ແຈ້ງຂ່າວ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບວຽກງານຂອງຕົນ ໃຫ້ສັງຄົມໂດຍຜ່ານສື່ມວນຊົນ ຕາມສະພາບການຮຽກຮ້ອງ, ໃນກໍລະນີມີໄພພິບັດ ຫຼື ວິກິດການດ້ານຕ່າງໆ ຕ້ອງແຈ້ງຂ່າວຢ່າງລຽນຕິດ ເພື່ອນໍາພາທາງສຽງສັງຄົມ.

**ມາດຕາ 49 (ປັບປຸງ) ການແກ້ຂ່າວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດສະເໜີໃຫ້ສື່ມວນຊົນແກ້ຂ່າວ ທີ່ອອກບໍ່ຖືກຕ້ອງ ຕາມຄວາມຈິງ.

ອົງການສື່ມວນຊົນທີ່ອອກຂ່າວບໍ່ຖືກຕ້ອງຕາມຄວາມຈິງ, ຂາດຫຼັກຖານ, ແຕະຕ້ອງເຖິງບົດບາດ, ກຽດສັກສີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຕ້ອງໄດ້ແກ້ຂ່າວ ແລະ ຂໍໂທດ ຜ່ານສື່ມວນຊົນ ຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີທີ່ອົງການສື່ມວນຊົນບໍ່ແກ້ຂ່າວ ຫຼື ໄດ້ແກ້ຂ່າວບໍ່ເໝາະສົມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດສະເໜີບົດຊີ້ແຈງຕໍ່ອົງການຄຸ້ມຄອງສື່ມວນຊົນ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເມື່ອເຫັນວ່າມີຄວາມເສຍຫາຍເກີດຂຶ້ນ.

ອົງການສື່ມວນຊົນ ຕ້ອງເຜີຍແຜ່ບົດຊີ້ແຈງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ໃນກໍລະນີບໍ່ເຫັນດີຕໍ່ບົດຊີ້ແຈງດັ່ງກ່າວອົງການສື່ມວນຊົນ ມີສິດສະແດງທັດສະນະຂອງຕົນຜ່ານສື່ມວນຊົນ. ອົງການສື່ມວນຊົນຈະບໍ່ເຜີຍແຜ່ບົດຊີ້ແຈງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກເຫັນວ່າຂັດກັບກົດໝາຍ, ພ້ອມດຽວກັນນັ້ນ ກໍແຈ້ງຕອບເຫດຜົນໃຫ້ຜູ້ກ່ຽວຂ້ອງຊາບເປັນລາຍລັກອັກສອນ.

**ມາດຕາ 50 (ປັບປຸງ) ການບໍລິການ**

ການບໍລິການຂອງສື່ມວນຊົນ ແມ່ນ ການທີ່ສື່ມວນຊົນໂຄສະນາສິນຄ້າ ຫຼື ບໍລິການທາງສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກຜ່ານລະບົບສາຍ, ເຄື່ອງສົ່ງພາກພື້ນດິນ, ດາວທຽມ ຫຼື ເຄືອຂ່າຍອິນເຕີເນັດໃຫ້ລູກຄ້າ ໂດຍເກັບຄ່າບໍລິການ.

ສື່ມວນຊົນທຸກປະເພດ ສາມາດໂຄສະນາສິນຄ້າ ຫຼື ບໍລິການປະເພດຕ່າງໆ ໃຫ້ລູກຄ້າແຕ່ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ເນື້ອໃນໂຄສະນາສິນຄ້າ ຫຼື ການບໍລິການ ຜ່ານສື່ມວນຊົນທຸກປະເພດ ຕ້ອງໃຫ້ຖືກກັບຄວາມເປັນຈິງ, ບໍ່ເວົ້າໂຍກ, ເວົ້າເກີນຄຸນນະພາບຂອງສິນຄ້າ ຫຼື ຂອງການບໍລິການນັ້ນ ແລະ ຕ້ອງໄດ້ຮັບອະນຸຍາດ ເພື່ອໂຄສະນາເຜີຍແຜ່ ຈາກອົງການຄຸ້ມຄອງວຽກງານທີ່ກ່ຽວຂ້ອງ.

ການໂຄສະນາສິນຄ້າ ຫຼື ບໍລິການໃຫ້ລູກຄ້າຜ່ານສື່ມວນຊົນ ລວມທັງການເກັບຄ່າບໍລິການນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 51 ການບັນເທີງ**

ການບັນເທີງເປັນວຽກງານໜຶ່ງຂອງສື່ມວນຊົນ ເພື່ອສ້າງບັນຍາກາດ, ຄວາມເບີກບານມ່ວນຊື່ນ ໃຫ້ແກ່ສັງຄົມ ທັງເປັນການໂຄສະນາ, ສຶກສາອົບຮົມ, ແນະນຳ, ປຸກລະດົມພົນລະເມືອງໃຫ້ມີຄວາມຕື່ນຕົວເປັນເຈົ້າການເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ການບັນເທີງທີ່ນຳອອກເຜີຍແຜ່ຜ່ານສື່ມວນຊົນນັ້ນ ປະກອບດ້ວຍ ການສະແດງສິນລະປະ ວັນນະຄະດີ, ການຮ້ອງເພງ, ການຂັບ, ການລຳ, ການບັນເລງສຽງດົນຕີ, ການສະແດງລະຄອນ, ການກິລາ-ກາຍຍະກຳ, ວັນນະກຳ ແລະ ອື່ນໆ ທີ່ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ຮີດຄອງ, ວັດທະນະທຳປະເພນີອັນດີງາມຂອງຊາດ, ຂອງຊົນເຜົ່າ ແລະ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ.

## ໝວດທີ 5
## ການເຄື່ອນໄຫວວຽກງານສື່ມວນຊົນ

**ມາດຕາ 52 (ໃໝ່) ຂໍ້ມູນຕົ້ນຕໍຕ້ອງບັນທຶກໃນຜະລິດຕະພັນສື່ມວນຊົນ**

ຂໍ້ມູນຕົ້ນຕໍທີ່ຕ້ອງບັນທຶກໃນຜະລິດຕະພັນສື່ມວນຊົນ ມີ ດັ່ງນີ້:

1. ຢູ່ໜ້າທຳອິດຂອງສື່ສິ່ງພິມ ຕ້ອງມີຊື່ຂອງຜະລິດຕະພັນໜັງສືພິມ, ຊື່ອົງການສື່ມວນຊົນ, ຊື່ອົງການເຈົ້າຂອງສື່ມວນຊົນ ຂຽນໃສ່ກ້ອງຊື່ອົງການສື່ມວນຊົນ, ໝາຍເລກສະບັບສຳລັບສື່ສິ່ງພິມ; ຢູ່ດ້ານລຸ່ມຂອງໜ້າສຸດທ້າຍຂອງໜັງສືພິມຕ້ອງມີ ວັນ, ເດືອນ, ປີ ອອກຈຳໜ່າຍ, ໄລຍະການຈຳໜ່າຍ; ທີ່ຢູ່ ສຳນັກງານ, ໂຮງພິມ; ຂະໜາດ, ຈຳນວນຂອງໜ້າ, ລາຄາຂອງສື່ສິ່ງພິມ;

2. ສຳລັບວິທະຍຸກະຈາຍສຽງ ແລະ ໂທລະພາບໄລຍະທຳອິດ ໃຫ້ສະເໜີ ຊື່ອົງການສື່ມວນຊົນ, ຊື່ລາຍການດ້ວຍ ພາບ, ສຽງ ແລະ ດົນຕີປະກອບ; ໄລຍະກາງ ຕ້ອງມີກາໝາຍຂອງສະຖານີ, ກາໝາຍຂອງລາຍການສະເພາະໂທລະພາບ; ໄລຍະທ້າຍຂອງລາຍການ ໃຫ້ແຈ້ງລາຍຊື່ຄະນະຮັບຜິດຊອບການຜະລິດ ແລະ ຜູ້ຮ່ວມ

ງານ, ໃຫ້ແຈ້ງທີ່ຕັ້ງສຳນັກງານ ແລະ ສູນຜະລິດ, ໝາຍເລກໂທລະສັບ, ໂທລະສານ, ອີເມວ, ລະຫັດຊື່ທາງອິນເຕີເນັດ ແລະ ອື່ນໆ;

3. ຢູ່ໜ້າທຳອິດຂອງສື່ແບບໃໝ່ ຕ້ອງມີເລກທີໃບອະນຸຍາດ, ວັນທີ, ເດືອນ, ປີ ອອກໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ, ທີ່ຢູ່ຂອງສຳນັກງານ, ໝາຍເລກໂທລະສັບ, ໂທລະສານ, ອີເມວ, ຊື່ ແລະ ນາມສະກຸນຂອງຫົວໜ້າອົງການສື່ມວນຊົນ, ລະຫັດຊື່ທາງອິນເຕີເນັດ ຫຼື ເວັບໄຊ.

### ມາດຕາ 53 (ປັບປຸງ) ການພິມ ແລະ ຈຳໜ່າຍສື່ສິ່ງພິມ

ການພິມສື່ສິ່ງພິມລາວ ແມ່ນ ໃຫ້ພິມຢູ່ ສປປ ລາວ ເປັນຕົ້ນຕໍ, ສື່ສິ່ງພິມໃດທີ່ຈະສົ່ງໄປພິມ ຫຼື ຈຳໜ່າຍຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ອົງການສື່ມວນຊົນ ເປັນຜູ້ຈັດຕັ້ງການຈຳໜ່າຍສື່ສິ່ງພິມຂອງຕົນ ຫຼື ມອບສິດໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຮັບຜິດຊອບການບໍລິການຈຳໜ່າຍແທນກໍໄດ້ ແຕ່ຕ້ອງຮັບປະກັນການຈຳໜ່າຍໃຫ້ເຖິງເປົ້າໝາຍ ແລະ ທັນຕາມເວລາທີ່ໄດ້ກຳນົດໄວ້.

ສື່ສິ່ງພິມ ທີ່ພິມຈຳໜ່າຍຖືກຕ້ອງຕາມກົດໝາຍ ສາມາດສົ່ງອອກໄປຕ່າງປະເທດ. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳເອົາສື່ສິ່ງພິມຕ່າງປະເທດເຂົ້າມາພິມ, ຈຳໜ່າຍຢູ່ ສປປ ລາວ ຕ້ອງຂໍອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳເຂົ້າ-ສົ່ງອອກ ສື່ສິ່ງພິມ ຕ້ອງກວດກາເນື້ອໃນ ກ່ອນຈະແຈກຢາຍ ແລະ ຮັບຜິດຊອບຕໍ່ເນື້ອໃນສື່ສິ່ງພິມທີ່ຕົນນຳເຂົ້າ.

ຜູ້ຈຳໜ່າຍສື່ສິ່ງພິມທີ່ຖືກຫ້າມຈຳໜ່າຍ ຕ້ອງເກັບຄືນເພື່ອທຳລາຍ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ.

### ມາດຕາ 54 (ປັບປຸງ) ການເພີ່ມໜ້າພິມຂອງສື່ສິ່ງພິມ

ອົງການສື່ມວນຊົນ ທີ່ຕ້ອງການພິມ ແລະ ຈຳໜ່າຍສື່ສິ່ງພິມເພີ່ມ, ເພີ່ມຈຳນວນໜ້າ, ພິມສະບັບສອດໃນ ຫຼື ຊ້ອນທ້າຍ, ພິມເພີ່ມໃບຂ່າວພິເສດ ສາມາດເຮັດໄດ້ຕາມສິດ ແລະ ໜ້າທີ່ຂອງຕົນ ແຕ່ຕ້ອງລາຍງານໃຫ້ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ສິບຫ້າວັນ ກ່ອນການຈັດຕັ້ງປະຕິບັດ.

### ມາດຕາ 55 (ປັບປຸງ) ການເພີ່ມລາຍການວິທະຍຸກະຈາຍສຽງ ແລະ ໂທລະພາບ

ສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບ ທີ່ມີຄວາມຕ້ອງການເພີ່ມລາຍການໃດໜຶ່ງນັ້ນ ຕ້ອງລາຍງານໃຫ້ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ສາມສິບວັນ ກ່ອນການຈັດຕັ້ງປະຕິບັດ.

### ມາດຕາ 56 (ປັບປຸງ) ລາຍການກະຈາຍສຽງ ແລະ ພາບ

ລາຍການກະຈາຍ ສຽງ ແລະ ພາບ ຂອງສື່ມວນຊົນລາວ ຕ້ອງຜະລິດ ແລະ ອອກອາກາດຈາກດິນແດນ ສປປ ລາວ, ໃນກໍລະນີທີ່ມີຈຸດປະສົງກະຈາຍລາຍການເຫຼົ່ານັ້ນຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງເອົາລາຍການກະຈາຍສຽງ ແລະ ພາບຂອງຕ່າງປະເທດອອກອາກາດຢູ່ ສປປ ລາວ ຜ່ານລະບົບໂທລະພາບໃຊ້ສາຍ ແລະ ບໍ່ໃຊ້ສາຍ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ.

**ມາດຕາ 57 (ໃໝ່) ການບໍລິການສິ່ງສັນຍານ ແລະ ກະຈາຍຄື້ນຄວາມຖີ່**

ການບໍລິການສົ່ງສັນຍານ ແລະ ກະຈາຍຄື້ນຄວາມຖີ່ໃຫ້ວິທະຍຸກະຈາຍສຽງ, ໂທລະພາບ ຕ້ອງຮັບປະກັນຄຸນນະພາບດ້ານເຕັກນິກ ໃຫ້ຖືກຕ້ອງ, ຄົບຖ້ວນ ໂດຍການອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

ການບໍລິການສົ່ງສັນຍານ ແລະ ກະຈາຍຄື້ນຄວາມຖີ່ວິທະຍຸກະຈາຍສຽງ, ໂທລະພາບ ຊຶ່ງຮັບໃຊ້ໜ້າທີ່ການເມືອງຂອງຊາດ ແລະ ຂອງທ້ອງຖິ່ນນັ້ນ ຕ້ອງໃຫ້ຄົບຖ້ວນ, ຮັບປະກັນເວລາ ແລະ ກວມເອົາເຂດເປົ້າໝາຍ ເຊັ່ນ ເຂດຊົນເຜົ່າ, ທຸກຍາກ, ຫ່າງໄກສອກຫຼີກ, ພູດອຍ ແລະ ເຂດຊາຍແດນ.

**ມາດຕາ 58 (ໃໝ່) ການປ້ອງກັນເນື້ອໃນລາຍການ ວິທະຍຸກະຈາຍສຽງ, ໂທລະພາບ, ໂທລະໂຄ່ງ ແລະ ເວັບໄຊ**

ວິທະຍຸກະຈາຍສຽງ, ໂທລະພາບ, ໂທລະໂຄ່ງ ແລະ ເວັບໄຊ ມີສິດນຳໃຊ້ມາດຕະການດ້ານເຕັກໂນໂລຊີ ເພື່ອປ້ອງກັນເນື້ອໃນລາຍການວິທະຍຸກະຈາຍສຽງ, ໂທລະພາບ, ໂທລະໂຄ່ງ ແລະ ເນື້ອໃນເວັບໄຊຂອງຕົນ.

**ມາດຕາ 59 (ປັບປຸງ) ການສ້າງ ແລະ ການນຳໃຊ້ສື່ຜ່ານອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງເວັບໄຊຂອງຕົນ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ຂໍ້ມູນ ຂ່າວສານທີ່ລົງໃນເວັບໄຊ ຕ້ອງໃຫ້ຖືກຕ້ອງຕາມຕົ້ນສະບັບ, ແຈ້ງແຫຼ່ງຂໍ້ມູນ, ບົ່ງຊື່ຂອງຜູ້ຂຽນ, ຊື່ຂອງອົງການສື່ມວນຊົນ, ເວລາລົງຂໍ້ມູນ ແລະ ເວລາສົ່ງຂໍ້ມູນ ຂ່າວສານດັ່ງກ່າວ.

ການນຳໃຊ້, ການບໍລິການສື່ຜ່ານອິນເຕີເນັດ ຕ້ອງໄດ້ປະສານສົມທົບ ແລະ ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ເນື້ອໃນຂອງຂໍ້ມູນ ຂ່າວສານທີ່ເອົາລົງໃນເຄືອຂ່າຍອິນເຕີເນັດ ຕ້ອງບໍ່ລະເມີດຂໍ້ຫ້າມ ຊຶ່ງກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້ ແລະ ບົດບັນຍັດຂອງກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ສາມາດຖືເປັນຫຼັກຖານ ແລະ ມີຜົນທາງດ້ານກົດໝາຍ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ສ້າງເວັບໄຊ ຕ້ອງມີລະບົບຄຸ້ມຄອງຂໍ້ມູນ ຂ່າວສານ, ມີຄວາມຮັບຜິດຊອບຕິດຕາມກວດກາ ແລະ ເປັນເຈົ້າການລຶບຂໍ້ມູນ ຂ່າວສານທີ່ລະເມີດຂໍ້ຫ້າມ.

**ມາດຕາ 60 (ໃໝ່) ການນຳໃຊ້ສື່ສັງຄົມອອນລາຍຂອງອົງການສື່ມວນຊົນ**

ການນຳໃຊ້ສື່ສັງຄົມອອນລາຍຂອງອົງການສື່ມວນຊົນ ໃຫ້ປະຕິບັດ ດັ່ງນີ້:

1. ເຄົາລົບຈັນຍາບັນນັກຂ່າວ;
2. ຕ້ອງລົງທະບຽນສ່ວນຕົວບຸກຄະລາກອນສື່ມວນຊົນ ຫຼື ອົງການສື່ມວນຊົນນຳອົງການຄຸ້ມຄອງສື່ມວນຊົນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
3. ມີກາໝາຍສັນຍາລັກຂອງເວັບໄຊ ຫຼື ໜ້າເວັບ;

4. ເຄົາລົບ ແລະ ຮັບຮູ້ຂໍ້ມູນ ຂ່າວສານທີ່ຜະລິດໂດຍບຸກຄົນອື່ນໃນສື່ສັງຄົມອອນລາຍ. ຖ້າຕ້ອງການນຳໃຊ້ ຂໍ້ຄວາມ, ຮູບພາບ ແລະ ສຽງຕ່າງໆ ຕ້ອງກວດສອບ ແລະ ຂໍອະນຸຍາດຈາກຜູ້ຜະລິດ ແລະ ອ້າງອີງແຫຼ່ງທີ່ມາຂອງຂໍ້ມູນ ຂ່າວສານ;

5. ຂໍອະນຸຍາດ ຈາກຄະນະຈັດຕັ້ງປະຊຸມກ່ອນເຜີຍແຜ່ຂໍ້ມູນ ຂ່າວສານຂອງກອງປະຊຸມນັ້ນ;

6. ຕ້ອງຈຳແນກ ຂ່າວ ແລະ ຄວາມເຫັນອອກຈາກກັນໃຫ້ຊັດເຈນ;

7. ຕ້ອງດຳເນີນການແກ້ຄວາມຜິດໂດຍທັນທີ ແລະ ສະແດງຄຳຂໍໂທດ ແລະ ໃຫ້ຜູ້ເສຍຫາຍມີໂອກາດຊີ້ແຈງ ຖ້າມີຄວາມຜິດພາດ ດ້ານການສະເໜີຂໍ້ມູນ ຂ່າວສານ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

8. ສະເໜີຂໍ້ມູນ ຂ່າວສານ ທີ່ບໍ່ລະເມີດຂໍ້ຫ້າມຂອງກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

9. ເຄົາລົບສົນທິສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 61 (ປັບປຸງ) ການສຳເນົາຜະລິດຕະພັນສື່ມວນຊົນ**

ຜະລິດຕະພັນສື່ມວນຊົນທຸກປະເພດ ໄດ້ຮັບການສະຫງວນລິຂະສິດ, ສຳເນົາ ແລະ ເກັບຮັກສາໄວ້ ຢ່າງໜ້ອຍ ຊາວຫ້າປີ.

ຜະລິດຕະພັນສື່ສິ່ງພິມ ຈຳນວນ ຫ້າ ສະບັບ ໃຫ້ມອບແກ່ອົງການຄຸ້ມຄອງສື່ມວນຊົນ ແລະ ຫໍສະໝຸດແຫ່ງຊາດ. ສຳລັບຜະລິດຕະພັນສື່ເອເລັກໂຕຣນິກນັ້ນ ຕ້ອງມອບສຳເນົາຜະລິດຕະພັນທີ່ເລືອກເຟັ້ນຂອງຕົນ ເປັນຕົ້ນ ເຫດການປະຫວັດສາດສຳຄັນຂອງຊາດ ເພື່ອເກັບຮັກສາໄວ້ໃນສູນສຳເນົາຂອງຕົນ ແລະ ມອບໃຫ້ສູນສຳເນົາຮູບເງົາ ແລະ ວີດີໂອແຫ່ງຊາດເກັບຮັກສາ.

ຜະລິດຕະພັນສື່ມວນຊົນທຸກປະເພດຂອງອົງການສື່ມວນຊົນຂັ້ນທ້ອງຖິ່ນ ແມ່ນ ອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງເປັນຜູ້ ສຳເນົາ ແລະ ເກັບຮັກສາໃນສູນສຳເນົາຂອງຕົນຢ່າງເປັນລະບົບ.

**ມາດຕາ 62 (ໃໝ່) ລິຂະສິດໃນສື່ມວນຊົນ**

ສິດໃນລິຂະສິດ ກ່ຽວກັບການນຳໃຊ້, ການພິມ ແລະ ການເຜີຍແຜ່ຜະລິດຕະພັນສື່ມວນຊົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 63 (ປັບປຸງ) ການຈັດກອງປະຊຸມຖະແຫຼງຂ່າວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຈັດກອງປະຊຸມຖະແຫຼງຂ່າວ ເພື່ອແຈ້ງຂ່າວ, ອະທິບາຍ, ຕອບຄຳຖາມ ກ່ຽວກັບພາລະບົດບາດ, ສິດ, ໜ້າທີ່ ຫຼື ຜົນປະໂຫຍດຂອງຕົນນັ້ນ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນ ພາຍຫຼັງທີ່ໄດ້ຮັບຄຳເຫັນດີຈາກອົງການທີ່ກ່ຽວຂ້ອງ.

ອົງການສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຢູ່ ສປປ ລາວ ທີ່ມີຈຸດປະສົງຈັດກອງປະຊຸມຖະແຫຼງຂ່າວ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການເຄື່ອນໄຫວວຽກງານສື່ມວນຊົນ.

**ມາດຕາ 64 (ໃໝ່) ການຮ່ວມມືພາຍໃນ**

ອົງການສື່ມວນຊົນ ສາມາດຮ່ວມມືກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ສື່ມວນຊົນອື່ນ ເພື່ອພັດທະນາວຽກງານສື່ມວນຊົນ ເປັນຕົ້ນ ການຄົ້ນຄວ້າວິໄຈວິທະຍາສາດ, ການແລກປ່ຽນຜະລິດຕະພັນ, ການຜະລິດ ແລະ ການລົງທຶນຮ່ວມກັນ ໂດຍຜ່ານການຕົກລົງຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 65 (ໃໝ່) ການເຄື່ອນໄຫວຂອງສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ**

ການເຄື່ອນໄຫວຂອງສື່ມວນຊົນຕ່າງປະເທດ, ສຳນັກງານການທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນທາງດ້ານສື່ມວນຊົນ ຢູ່ ສປປ ລາວ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

# ພາກທີ V
# ຂໍ້ຫ້າມ

**ມາດຕາ 66 (ປັບປຸງ) ຂໍ້ຫ້າມສຳລັບອົງການສື່ມວນຊົນ**

ຫ້າມອົງການສື່ມວນຊົນ ມີ ພຶດຕິກຳ ດັ່ງນີ້:

1. ຍຸຍົງສົ່ງເສີມການກະທຳທີ່ເປັນການສ້າງຄວາມເສື່ອມເສຍໃຫ້ແກ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ;

2. ເປີດເຜີຍຄວາມລັບຂອງຊາດ, ຄວາມລັບທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ແບ່ງແຍກຄວາມສາມັກຄີ, ສ້າງຄວາມອາຄາດບາດໝາງລະຫວ່າງປະຊາຊົນລາວບັນດາເຜົ່າ, ສາສະໜາ ແລະ ຄວາມສາມັກຄີລະຫວ່າງຊາດ;

4. ສົ່ງເສີມການໃຊ້ຄວາມຮຸນແຮງ ແລະ ການໂຄສະນາຮັບໃຊ້ສົງຄາມຮຸກຮານທຸກປະເພດ;

5. ອອກຂ່າວບິດເບືອນຄວາມຈິງ, ແຕະຕ້ອງເຖິງກຽດສັກສີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

6. ໂຄສະນາຍຸຍົງສົ່ງເສີມການກໍ່ອາຊະຍາກຳ ແລະ ອະບາຍຍະມຸກ ເຊັ່ນ ການເສບສິ່ງເສບຕິດ, ການຫຼິ້ນການພະນັນ, ການເປັນນັກເລງອັນຕະພານ, ການທຳສິ່ງລາມົກອະນາຈານ, ແບບແຜນດຳລົງຊີວິດເປື່ອຍເຍື່ອຍ, ລ້າຫຼັງ;

7. ໂຄສະນາ, ເຜີຍແຜ່ສິ່ງມຶນເມົາເກີນຂອບເຂດ, ການເຊື່ອຖືງົມງວາຍ, ການກະທຳທີ່ຂັດກັບຮີດຄອງປະເພນີວັດທະນະທຳອັນດີງາມຂອງຊາດ, ພາບ, ສຽງ ແລະ ການກະທຳ ທີ່ກະທົບຕໍ່ຊີວິດ ແມ່ ແລະ ເດັກ ແລະ ສິ່ງຫຍໍ້ທໍ້ອື່ນ;

8. ເຜີຍແຜ່ຂ່າວ, ປຶ້ມ ແລະ ລາຍການ ທີ່ມີຄຳສັ່ງຫ້າມ ຫຼື ຖືກຍຶດໄວ້ແລ້ວ;

9. ພິມ, ກະຈາຍຂໍ້ມູນ ຂ່າວສານ, ຜະລິດຕະພັນສື່ມວນຊົນທຸກປະເພດທີ່ຖືກອົງການຄຸ້ມຄອງສື່ມວນຊົນຍຶດ ຫ້າມເຜີຍແຜ່;

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາສື່ມວນຊົນ
## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 69 (ປັບປຸງ) ອົງການຄຸ້ມຄອງສື່ມວນຊົນ**

ລັດຖະບານ ຄຸ້ມຄອງສື່ມວນຊົນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງສື່ມວນຊົນ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 70 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນການພັດທະນາວຽກງານຖະແຫຼງຂ່າວ ແລະ ສື່ມວນຊົນຕໍ່ລັດຖະບານ ເພື່ອພິຈາລະນາ, ຕົກລົງ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບສື່ມວນຊົນ;
3. ຈັດຕັ້ງ, ຄຸ້ມຄອງ ແລະ ຊີ້ນຳການເຄື່ອນໄຫວຂອງອົງການສື່ມວນຊົນໃນຂອບເຂດທົ່ວປະເທດ;
4. ສ້າງ, ບຳລຸງ, ຍົກລະດັບໃຫ້ແກ່ພະນັກງານສື່ມວນຊົນທາງດ້ານການເມືອງ, ວິຊາສະເພາະ ແລະ ຈັນຍາບັນ;
5. ຄົ້ນຄວ້າ, ກຳນົດມາດຕະຖານເຕັກນິກ ແລະ ນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ, ທັນສະໄໝໃນຂົງເຂດສື່ມວນຊົນ;
6. ຄົ້ນຄວ້າ, ພິຈາລະນາ, ອະນຸຍາດ, ໂຈະ ແລະ ຖອນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ອະນຸຍາດ ແລະ ຍົກເລີກ ການຖ່າຍທອດສົດ, ການນຳໃຊ້ຊ່ອງໂທລະພາບ, ການນຳເຂົ້າ-ສົ່ງອອກຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມຄວາມຮັບຜິດຊອບຂອງຕົນ ແລະ ຈັດສັນຄື້ນຄວາມຖີ່;
8. ອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຄຸ້ມຄອງ ອຸປະກອນສື່ເອເລັກໂຕຣນິກ;
9. ຄຸ້ມຄອງສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ການສຳເນົາຜະລິດຕະພັນສື່ມວນຊົນໃນຂອບເຂດທີ່ຕົນຮັບຜິດຊອບ;
10. ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ຕໍ່ອົງການສື່ມວນຊົນ ແລະ ບຸກຄະລາກອນຂອງສື່ມວນຊົນທີ່ຕົນຮັບຜິດຊອບ;

10. ຂົ່ມຂູ່, ລ່ວງລະເມີດກຽດສັກສີ ຂອງບັນນາທິການ, ນັກຂ່າວ, ບຸກຄະລາກອນສື່ມວນຊົນ, ທຳລາຍອຸປະກອນສື່ມວນຊົນ, ຂັດຂວາງການປະຕິບັດວຽກງານວິຊາສະເພາະຂອງນັກຂ່າວຕາມກົດໝາຍ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 67 (ປັບປຸງ) ຂໍ້ຫ້າມສຳລັບບຸກຄະລາກອນສື່ມວນຊົນ**

ຫ້າມບຸກຄະລາກອນສື່ມວນຊົນ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດຕິພີ່ນ້ອງ;

2. ປະຕິບັດສິດ, ໜ້າທີ່ສື່ມວນຊົນເກີນຂອບເຂດຂອງຂໍ້ຕົກລົງ ຫຼື ລະເມີດກົດໝາຍ ແລະ ລະບຽບການຂອງສື່ມວນຊົນ;

3. ສ້າງຂໍ້ມູນ ຂ່າວສານທຸກປະເພດທີ່ຂັດກັບຈັນຍາບັນຂອງນັກຂ່າວລາວ;

4. ໃຊ້ພາສາຊອດກະຈາ ແລະ ຄວາມຫຍາບຊ້າ;

5. ນຸ່ງຖື ແລະ ແຕ່ງກາຍບໍ່ສຸພາບໃນເວລາອອກອາກາດທາງໂທລະພາບ;

6. ລະເມີດຂໍ້ຫ້າມສຳລັບອົງການສື່ມວນຊົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 68 (ປັບປຸງ) ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບກຸຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວຂອງນັກຂ່າວ ແລະ ແຊກແຊງເນື້ອໃນຂອງຂ່າວ, ບົດ ແລະ ລາຍການທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

2. ຂັດຂວາງການຜະລິດ ແລະ ການເຜີຍແຜ່ຜະລິດຕະພັນສື່ມວນຊົນທຸກປະເພດທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ເຜີຍແຜ່ຜະລິດຕະພັນສື່ມວນຊົນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ໃຫ້ສິນບົນແກ່ນັກຂ່າວ ຫຼື ອົງການສື່ມວນຊົນເພື່ອອອກ ຂ່າວ, ບົດ ຕາມຈິດໃຈຂອງຕົນ;

5. ໃຊ້ຄວາມຮຸນແຮງ, ບັງຄັບ, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ຮ້າຍດ່າ, ໃຊ້ຄວາມຫຍາບຊ້າ, ນາບຂູ່ ຫຼື ທຳຮ້າຍບຸກຄະກອນສື່ມວນຊົນ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນທີ່ກ່ຽວຂ້ອງກັບການໃຫ້ຂ່າວ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

11. ສະກັດກັ້ນ, ແກ້ໄຂຄຳສະເໜີ ແລະ ການເຄື່ອນໄຫວຂອງສື່ມວນຊົນທີ່ຂັດກັບກົດໝາຍ ແລະ ລະບຽບການ ຕາມພາລະບົດບາດຂອງຕົນ;

12. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ໃນການຄຸ້ມຄອງການເຄື່ອນໄຫວຂອງສື່ມວນຊົນ ລວມທັງສື່ມວນຊົນລາວທີ່ພົວພັນກັບຕ່າງປະເທດ ແລະ ຄຸ້ມຄອງການເຄື່ອນໄຫວຂອງສື່ມວນຊົນຕ່າງປະເທດຢູ່ ສປປ ລາວ;

13. ຕິດຕາມ ແລະ ສັງລວມຜົນການໂຄສະນາ, ຖະແຫຼງຂ່າວຂອງສື່ມວນຊົນໃນແຕ່ລະໄລຍະ, ສັງລວມວິໄຈຂ່າວຂອງສື່ມວນຊົນຕ່າງປະເທດກ່ຽວກັບ ສປປ ລາວ ເພື່ອເປັນຂໍ້ມູນ ແລະ ລາຍງານຕໍ່ລັດຖະບານຢ່າງເປັນປົກກະຕິ;

14. ກວດກາ, ວິເຄາະ ແລະ ຄົ້ນຄວ້າຂໍ້ມູນ ຂ່າວສານ ທີ່ເຜີຍແຜ່ລົງໃນສື່ແບບໃໝ່, ຖະແຫຼງຂ່າວຢ່າງເປັນທາງການ ເພື່ອຊີ້ແຈງຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງຂໍ້ມູນ ຂ່າວສານທີ່ມີຄວາມສ່ຽງຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

15. ພົວພັນ ແລະ ຮ່ວມມືກັບສາກົນທາງດ້ານສື່ມວນຊົນ ຕາມການມອບໝາຍ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງສື່ມວນຊົນ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນງານ, ແຜນການ, ກົດໝາຍ ແລະ ລະບຽບການ, ຄຳສັ່ງ, ຄຳແນະນຳ, ແຈ້ງການກ່ຽວກັບສື່ມວນຊົນ;

2. ຄົ້ນຄວ້າ ແລະ ຕົກລົງທິດທາງ, ແຜນການໂຄສະນາໃຫ້ແກ່ສື່ມວນຊົນຂອງຕົນໃນແຕ່ລະໄລຍະ;

3. ຄົ້ນຄວ້າ ແລະ ສະເໜີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພິຈາລະນາ ສ້າງຕັ້ງ ແລະ ຖອນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນທີ່ຂຶ້ນກັບຕົນ ໂດຍຜ່ານອົງການປົກຄອງ ແຂວງ, ນະຄອນຫຼວງ;

4. ຄຸ້ມຄອງ ແລະ ຊີ້ນຳການເຄື່ອນໄຫວຂອງສື່ມວນຊົນທີ່ຕົນຮັບຜິດຊອບ;

5. ຄົ້ນຄວ້າ, ສະເໜີແຜນການ ສ້າງ ແລະ ຍົກລະດັບ ບຸກຄະລາກອນສື່ມວນຊົນທີ່ຕົນຮັບຜິດຊອບ ຕໍ່ອົງການປົກຄອງ ແຂວງ, ນະຄອນຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງ;

6. ຂຶ້ນແຜນຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍວຽກງານສື່ມວນຊົນ ເພື່ອຮັບໃຊ້ໜ້າທີ່ການເມືອງ ແລະ ການບໍລິການປະຊາຊົນລາວບັນດາເຜົ່າຢູ່ພາຍໃນ ແຂວງ, ນະຄອນຫຼວງ ໃຫ້ວ່ອງໄວ, ແໜ້ນຄົນ ແລະ ມີປະສິດທິຜົນ;

7. ຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວເກັບກຳຂ່າວຢູ່ພາຍໃນ ແຂວງ, ນະຄອນຫຼວງ ຕາມກົດໝາຍ ແລະ ລະບຽບການ;

8. ຄຸ້ມຄອງພາຫະນະສື່ມວນຊົນ ແລະ ການນຳເຂົ້າ-ສົ່ງອອກ ອຸປະກອນສື່ເອເລັກໂຕຣນິກ ແລະ ຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມຄວາມຮັບຜິດຊອບຂອງຕົນ ແລະ ລະບຽບການ;

9. ແນະນຳ, ປຸກລະດົມ, ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງເພື່ອເກັບກຳຂ່າວ ແລະ ສະໜອງຂ່າວ ໃຫ້ແກ່ສື່ມວນຊົນ;

10. ແກ້ໄຂຄຳສະເໜີ, ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆຕໍ່ອົງການສື່ມວນຊົນ ແລະ ບຸກຄະລາກອນຂອງສື່ມວນຊົນທີ່ຕົນຮັບຜິດຊອບ;

11. ຕິດຕາມ, ສະຫຼຸບ, ສັງລວມສະຖິຕິ ແລະ ປະເມີນຜົນວຽກງານສື່ມວນຊົນ ແລ້ວລາຍງານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢ່າງເປັນປົກກະຕິ;

12. ຕິດຕາມ ກວດກາ, ວິເຄາະຂໍ້ມູນ ຂ່າວສານ ທີ່ເຜີຍແຜ່ລົງໃນສື່ແບບໃໝ່, ຖະແຫຼງຂ່າວຢ່າງເປັນທາງການ ເພື່ອຊີ້ແຈງຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ແລະ ມີຜົນກະທົບຕໍ່ ແຂວງ, ນະຄອນຫຼວງ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງຂໍ້ມູນ ຂ່າວສານ ທີ່ມີຄວາມສ່ຽງຕໍ່ຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມພາຍໃນ ແຂວງ, ນະຄອນຫຼວງ;

13. ພົວພັນຮ່ວມມືດ້ານສື່ມວນຊົນກັບຕ່າງປະເທດ ຕາມການມອບໝາຍຂອງອົງການທີ່ມີສິດອຳນາດ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 72 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງສື່ມວນຊົນ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ, ຄຳສັ່ງ, ຄຳແນະນຳ, ແຈ້ງການກ່ຽວກັບສື່ມວນຊົນຢູ່ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ;

2. ແນະນຳ, ປຸກລະດົມ, ຊຸກຍູ້ການຈັດຕັ້ງຮາກຖານຢູ່ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ ເພື່ອເກັບກຳຂ່າວ ແລະ ສະໜອງຂ່າວໃຫ້ແກ່ສື່ມວນຊົນ;

3. ຄົ້ນຄວ້າ ແລະ ສະເໜີ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ເພື່ອຂໍອະນຸຍາດ ແລະ ຖອນໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນທີ່ຂຶ້ນກັບຕົນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

4. ຄຸ້ມຄອງພາຫະນະສື່ມວນຊົນທີ່ເຄື່ອນໄຫວຢູ່ ເມືອງ, ເທດສະບານ, ນະຄອນ ຂອງຕົນໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. ຄົ້ນຄວ້າ, ສະເໜີແຜນການ ສ້າງ ແລະ ຍົກລະດັບ ບຸກຄະລາກອນສື່ມວນຊົນທີ່ຕົນຮັບຜິດຊອບ ຕໍ່ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ຂະແໜງການທີ່ກ່ຽວຂ້ອງ;

6. ຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວເກັບກຳຂ່າວຢູ່ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ;

7. ຄຸ້ມຄອງພາຫະນະສື່ມວນຊົນ ແລະ ການນຳເຂົ້າ-ສົ່ງອອກ ອຸປະກອນສື່ເອເລັກໂຕຣນິກ ແລະ ຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມຄວາມຮັບຜິດຊອບຂອງຕົນ ແລະ ລະບຽບການ;

8. ຕິດຕາມ, ສະຫຼຸບ, ສັງລວມສະຖິຕິ ແລະ ປະເມີນຜົນວຽກງານສື່ມວນຊົນ ແລ້ວລາຍງານໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

9. ກວດກາ, ວິເຄາະຂໍ້ມູນ ຂ່າວສານ ທີ່ເຜີຍແຜ່ລົງໃນສື່ແບບໃໝ່, ຖະແຫຼງຂ່າວຢ່າງເປັນທາງການ ເພື່ອຊີ້ແຈງຂໍ້ມູນ ຂ່າວສານທີ່ມີຜົນກະທົບຕໍ່ ເມືອງ, ເທດສະບານ, ນະຄອນ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອແຈ້ງຂໍ້ມູນ ຂ່າວສານ ທີ່ມີຄວາມສ່ຽງຕໍ່ຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມພາຍໃນ ເມືອງ, ເທດສະບານ, ນະຄອນ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 73 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນ**

ທຸກ ຂະແໜງການ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນ ຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາ

**ມາດຕາ 74 (ປັບປຸງ) ອົງການກວດກາສື່ມວນຊົນ**

ອົງການກວດກາສື່ມວນຊົນ ປະກອບດ້ວຍ:

1. ການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຄະນະສະເພາະກິດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 75 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສື່ມວນຊົນໃນການກວດກາ**

ອົງການຄຸ້ມຄອງສື່ມວນຊົນ ມີ ສິດ ແລະ ໜ້າທີ່ ໃນການກວດກາວຽກຂອງຕົນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບສື່ມວນຊົນ;

2. ກວດກາການເຄື່ອນໄຫວວຽກງານຂອງອົງການສື່ມວນຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ອອກຄຳສັ່ງ, ຄຳແນະນຳ, ແຈ້ງການໃຫ້ອົງການສື່ມວນຊົນທີ່ຂຶ້ນກັບຕົນ ເພື່ອປັບປຸງ, ປ່ຽນແປງ ຫຼື ຢຸດເຊົາການເຄື່ອນໄຫວວຽກງານສື່ມວນຊົນທີ່ເຫັນວ່າບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

4. ສະເໜີໃຫ້ການຈັດຕັ້ງທີ່ກ່ຽວຂ້ອງອອກຄຳສັ່ງ, ແນະນຳ ຫຼື ແຈ້ງການໃຫ້ປັບປຸງ, ປ່ຽນແປງ ຫຼື ໃຫ້ຢຸດເຊົາການເຄື່ອນໄຫວວຽກງານສື່ມວນຊົນ ຖ້າເຫັນວ່າບໍ່ຖືກຕ້ອງກັບກົດໝາຍ ແລະ ລະບຽບການ ຫຼື ມີການລະເມີດຂໍ້ຫ້າມ ຕາມແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນ ມາດຕາ 66, 67 ແລະ 68 ຂອງກົດໝາຍສະບັບນີ້;

5. ພົວພັນປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງຢູ່ ສູນກາງ ແລະ ທ້ອງຖິ່ນ ໃນການປະຕິບັດວຽກງານກວດກາຂອງຕົນ;

6. ສະຫຼຸບ ແລະ ລາຍງານຜົນຂອງການປະຕິບັດວຽກງານກວດກາແຕ່ລະໄລຍະ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 76 (ປັບປຸງ) ເນື້ອໃນການກວດກາ**

ການກວດກາສື່ມວນຊົນ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການ ສ້າງ ແລະ ປະຕິບັດແຜນການ, ໂຄງການຂອງອົງການສື່ມວນຊົນແຕ່ລະໄລຍະ;
2. ກວດກາເນື້ອໃນການອອກຂ່າວ, ບົດ ແລະ ລາຍການຜ່ານສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ;
3. ກວດກາການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນຂອງສື່ມວນຊົນ;
4. ກວດກາການປະກອບ ແລະ ການນຳໃຊ້ພື້ນຖານວັດຖຸ, ພາຫະນະ, ອຸປະກອນ ແລະ ງົບປະມານຂອງສື່ມວນຊົນ;
5. ກວດກາການປະຕິບັດກົດໝາຍ ແລະ ລະບຽບການຂອງສື່ມວນຊົນ.

**ມາດຕາ 77 (ປັບປຸງ) ຮູບການກວດກາ**

ການກວດກາສື່ມວນຊົນ ດຳເນີນດ້ວຍສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ໄດ້ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງອົງການຄຸ້ມຄອງສື່ມວນຊົນ, ອົງການທີ່ກ່ຽວຂ້ອງຂອງລັດ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຮູ້ກ່ອນລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາສື່ມວນຊົນແຕ່ລະຮູບການເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດສິດ ແລະ ໜ້າທີ່ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

### ມາດຕາ 78 (ໃໝ່) ເປົ້າໝາຍການກວດກາ

ເປົ້າໝາຍຂອງການກວດກາ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງອົງການຄຸ້ມຄອງສື່ມວນຊົນ, ອົງການຈັດຕັ້ງອື່ນຂອງລັດ, ອົງການຈັດຕັ້ງມະຫາຊົນ.

## ພາກທີ VII
## ວັນ, ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບຂອງສື່ມວນຊົນ

### ມາດຕາ 79 ວັນສື່ມວນຊົນແຫ່ງຊາດ

ວັນທີ 13 ສິງຫາ ແມ່ນ ວັນສື່ມວນຊົນແຫ່ງຊາດ, ສໍາລັບສື່ມວນຊົນແຕ່ລະປະເພດ ກໍມີວັນສະເພາະຂອງຕົນເພື່ອສະເຫຼີມສະຫຼອງ ແລະ ທວນຄືນເຖິງມູນເຊື້ອ, ຜົນງານ, ບົດຮຽນເພື່ອປັບປຸງ, ພັດທະນາວຽກງານສື່ມວນຊົນໃຫ້ດີຂຶ້ນ.

### ມາດຕາ 80 (ປັບປຸງ) ງົບປະມານຂອງອົງການສື່ມວນຊົນ

ອົງການສື່ມວນຊົນຂອງລັດ ມີງົບປະມານ ຊຶ່ງໄດ້ມາຈາກງົບປະມານຂອງລັດ, ລາຍຮັບຈາກການບໍລິການ, ການປະກອບສ່ວນຂອງສັງຄົມ.

ອົງການສື່ມວນຊົນຂອງພາກສ່ວນອື່ນ ມີງົບປະມານເປັນຂອງຕົນ ແລະ ສາມາດສ້າງກອງທຶນ ເພື່ອພັດທະນາສື່ມວນຊົນ ດ້ວຍການຈັດກິດຈະກໍາ ຫຼື ໃຫ້ການບໍລິການ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ການຄຸ້ມຄອງ, ການນໍາໃຊ້ງົບປະມານ ແລະ ກອງທຶນດັ່ງກ່າວ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 81 ເຄື່ອງໝາຍ ແລະ ຕາປະທັບຂອງສື່ມວນຊົນ

ສື່ມວນຊົນແຕ່ລະປະເພດມີ ເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນຜູ້ວາງອອກ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 82 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານສື່ມວນຊົນ ຈະໄດ້ຮັບການຍ້ອງຍໍ ເຊັ່ນ ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ນາມມະຍົດ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 83 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສື່ມວນຊົນ ລວມທັງຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66, 67 ແລະ 68 ຂອງກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ຄື ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ໂຈະການເຄື່ອນໄຫວຊົ່ວຄາວ, ຖອນ ໃບອະນຸຍາດເຄື່ອນໄຫວວຽກງານສື່ມວນຊົນ, ບັດນັກຂ່າວ, ບັດນັກວິຊາການດ້ານສື່ມວນຊົນ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 84 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 85 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ສື່ມວນຊົນ ສະບັບເລກທີ 01/ສພຊ, ວັນທີ 25 ກໍລະກົດ 2008.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້